ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-28 ທັນວາ 2022
ປີທີ 11
ສະບັບທີ 902

## ສສຊ ປະກອບຄຳເຫັນໃສ່ບົດລາຍງານວຽກງານ ກວດສອບແຫ່ງລັດ ແລະ ກວດກາແຫ່ງລັດ




ໜ້າ 8

## ຕ້ອນຮັບປີໃໝ່ ສົ່ງທ້າຍປີເກົ່າ

2023

ປີເກົ່າກຽມຍ່າງຍ້າຍ
ປີໃໝ່ນຳຄວາມສຸກ
ນຳເອົາພອນໄຊແກ້ວ
ຍື່ນປະຊາພີ່ນ້ອງ

ເລີຍລ່ວງລາໄປ
ສິ່ງດີມາຕ້ອນ
ເງິນຄຳຂອງມີຄ່າ
ການນຳພ້ອມຄູ່ຊູ່ຄືນ

ຂໍໃຫ້ສຸກລາບລົ້ນ
ຄິດປະສົງອັນໃດ
ໜ້າທີ່ການງານກ້າວ
ພັດທະນາສືບສ້າງ

ສົມດັ່ງມະໂນໝາຍ
ຈົ່ງສົມພະໄນມຸ້ງ
ພາລະນາໄນແຂງແກ່ນ
ລາວໃຫ້ຮຸ່ງຈະເລີນ ຊອບແລ້ວ!

## ກອງປະຊຸມຄົ້ງປະຖົມມະລຶກ ຂອງຄະນະ ສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX



(ສພຊ) ເພື່ອຜັນຂະຫຍາຍ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຄະນະສະມາຊິກ ສະພາແຫ່ງຊາດເພດຍິງ ຊຸດທີ IX, ສະບັບເລກທີ 264/ຄປຈ, ລົງວັນທີ 03/11/2022; ເພື່ອຄົ້ນຄວ້າປຶກສາຫາລື ແລະ ເປັນເອກະພາບກ່ຽວກັບທິດທາງ ແລະ ແຜນວຽກງານຈຸດສຸມໃນຕໍ່ໜ້າ ຂອງຄະນະສະມາຊິກສະພາແຫ່ງຊາດ ເພດຍິງ ຊຸດທີ IX; ເພື່ອອຳນວຍຄວາມສະດວກ ແລະ ຄວາມເປັນເອກະພາບຕໍ່ການເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX, ໃນວັນທີ 19 ທັນວາ 2022 ຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX ໄດ້ຈັດກອງປະຊຸມຄົ້ງປະຖົມມະລຶກຂອງຕົນຂຶ້ນ ໂດຍການເຂົ້າຮ່ວມຂອງທ່ານ

ອ່ານຕໍ່ໜ້າ 6

## ຕາງໜ້າຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນຕໍ່ບົດລາຍງານຂອງ 2 ອົງການ



(ສພຊ) ວັນທີ 22 ທັນວາ 2022, ທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ດັ່ງນີ້:

**I. ຕໍ່ບົດລາຍງານຂອງອົງການກວດສອບແຫ່ງລັດ ປະກອບມີ 3 ເນື້ອໃນຕົ້ນຕໍ ຄື:**

1. ຕໍ່ພາກສະຫລຸບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປີ 2022

ຄະນະປະຈຳສະພາແຫ່ງຊາດ ສະແດງຄວາມຊົມເຊີຍ ແລະ ເຫັນດີໂດຍພື້ນຖານຕໍ່ບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2022 ພາຍ

ອ່ານຕໍ່ໜ້າ 2

## ລັດຖະມົນຕີກະຊວງຍຸຕິທຳ ສະເໜີຮ່າງກົດໝາຍ ວ່າດ້ວຍທະບຽນສານ (ສະບັບປັບປຸງ)

(ສພຊ) ໃນວັນທີ 12 ທັນວາຜ່ານມາ, ທ່ານ ໄພວີ ສີບົວລີພາ ລັດຖະມົນຕີກະຊວງຍຸຕິທຳ ໄດ້ສະເໜີຮ່າງກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ວ່າ: ກົດໝາຍວ່າດ້ວຍທະບຽນສານ ເປັນກົດໝາຍສະບັບໜຶ່ງທີ່ມີຄວາມສຳຄັນຕໍ່ວຽກງານທະບຽນ

ອ່ານຕໍ່ໜ້າ 3



## ຄະນະຜູ້ແທນສະພາແຫ່ງຊາດລາວ ສຳເລັດ ການຢ້ຽມຢາມ ແລະ ເຮັດວຽກຢູ່ ສສ. ເຢຍລະມັນ



(ສພຊ) ຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສປປລາວ ນຳໂດຍທ່ານ ສັນຍາ ປຣະເສີດ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການການຕ່າງປະເທດ ໄດ້ສຳເລັດການຢ້ຽມຢາມ ແລະ ເຮັດວຽກ ຢູ່ສາທາລະນະລັດສະຫະພັນເຢຍລະມັນແຕ່ວັນທີ 11-18 ທັນວາ 2022 ຕາມການເຊື້ອເຊີນຂອງມູນນິທິໂຮຊາລຸກຊຳບວກຂອງ ສສ.ເຢຍລະມັນ ໂດຍມີຈຸດປະສົງຕົ້ນຕໍ ເພື່ອປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີນຳກັນ, ເພື່ອແລກປ່ຽນຂໍ້ມູນ ແລະ ບົດຮຽນ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດດ້ານນິຕິບັນຍັດ ລະຫວ່າງ ສະພາແຫ່ງຊາດ

ອ່ານຕໍ່ໜ້າ 8

## ປະທານຄະນະມິດຕະພາບລັດຖະສະພາລາວ-ຍີ່ປຸ່ນ ຕ້ອນຮັບຮອງລັດຖະມົນຕີຕ່າງປະເທດຍີ່ປຸ່ນ



ໜ້າ 3


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 5

ຊົມເຊີຍກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!

ຕາງໜ້າ...

ໃຕ້ສະພາບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫລາຍຢ່າງຈາກປັດໃຈພາຍນອກບວກກັບປັດໄຈພາຍໃນ ເຊິ່ງໄດ້ສົ່ງຜົນກະທົບຕໍ່ການປະຕິບັດແຜນການເຄື່ອນໄຫວປະຈໍາປີຂອງອົງການກວດສອບແຫ່ງລັດ, ແຕ່ອົງການກວດສອບແຫ່ງລັດ ໄດ້ມີຄວາມພະຍາຍາມຜ່ານຜ່າຈັດຕັ້ງປະຕິບັດແຜນການເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ການເມືອງຂອງຕົນດ້ວຍຄວາມຮັບຜິດຊອບສູງ ເຊິ່ງສາມາດຍາດໄດ້ຜົນສໍາເລັດຫລາຍດ້ານລະອຽດຕາມການລາຍງານຂອງອົງການກວດສອບແຫ່ງລັດທີ່ພົ້ນເດັ່ນເປັນຕົ້ນ:

1) ໄດ້ກວດຄືນການແກ້ໄຂຜົນການກວດສອບຕາມມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 25/ສພຊ, ລົງວັນທີ 16 ພະຈິກ 2021 ລາຍລະອຽດຕາມທີ່ໄດ້ສະເໜີໃນບົດລາຍງານ, ທີ່ພົ້ນ ເດັ່ນຄື:

- ກວດສອບການແກ້ໄຂລາຍຮັບ ປະຕິບັດໄດ້ 32,5% ຂອງແຜນການ ຈໍານວນ 106,17 ຕື້ກີບ;

- ກວດສອບໜີ້ຕ້ອງຮັບເກັບກູ້ຄືນໄດ້ 6,06% ຂອງແຜນການ ຈໍານວນ 5.212.,16 ຕື້ກີບ;

- ກວດສອບເງິນຈ່າຍລ່ວງໜ້າຄັງເງິນແຫ່ງຊາດ ແກ້ໄຂໄດ້ 3,31% ຂອງແຜນການ ຈໍານວນ 1.331,66 ຕື້ກີບ;

- ກວດສອບເງິນຍອດເຫລືອທີ່ຈ່າຍບໍ່ໝົດໃນປີ 2020 ແກ້ໄຂໄດ້ 5,72% ຂອງແຜນການ ຈໍານວນ 17,82 ຕື້ກີບ.

2) ໄດ້ກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈໍາປີ 2021 ເຊິ່ງຜົນການກວດສອບໄດ້ພົບເຫັນທີ່ພົ້ນເດັ່ນ ດັ່ງນີ້:

- ດ້ານລາຍຮັບ: ກວດສອບເຫັນລາຍຮັບ ເພີ່ມຈາກການລາຍງານຂອງກະຊວງການເງິນ ຈໍານວນ 141,30 ຕື້ກີບ;

- ດ້ານລາຍຈ່າຍ: ກວດສອບເຫັນລາຍຈ່າຍເພີ່ມຈາກການລາຍງານຂອງກະຊວງການເງິນ ຈໍານວນ 120,91 ຕື້ກີບ;

- ຂາດດຸນງົບປະມານ: ຕາມການລາຍງານຂອງກະຊວງການເງິນແມ່ນຂາດດຸນ 0,33% ຂອງ GDP, ອົງການກວດສອບ ພົບເຫັນຂາດດຸນ 0,31% ຂອງ GDP.

ສັງລວມແລ້ວເຫັນວ່າ ການກວດສອບເຫັນລາຍຮັບເພີ່ມ ແລະ ລາຍຈ່າຍເພີ່ມ ແມ່ນຕໍ່າກວ່າມາດຕະຖານການກວດສອບທີ່ໄດ້ກໍານົດກອບຄວາມແຕກຕ່າງລະຫວ່າງການລາຍງານ ຂອງອົງການກວດສອບແຫ່ງລັດ ແລະ ກະຊວງການເງິນ ຈໍານວນ 2% ເຊິ່ງສາມາດຢັ້ງຢືນການສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປີ 2021 ທີ່ກະຊວງການເງິນໄດ້ລາຍງານໄປແລ້ວນັ້ນ ແລະສາມາດຢັ້ງຢືນການຮັບຮອງຕາມມະຕິສະພາແຫ່ງຊາດ ສະບັບເລກທີ 63/ສພຊ, ລົງວັນທີ 9/12/2022 ແມ່ນມີຄວາມສອດຄ່ອງ.

3) ໄດ້ກວດສອບເອກະສານລາຍງານການເງິນຂອງ ໂຄງການເງິນກູ້ຢືມ ແລະ ຊ່ວຍເຫລືອລ້າ, ທະນາຄານ, ວິສາຫະກິດລັດລົງທຶນ ປີ 2021 ເຊິ່ງໄດ້ກວດເຫັນບັນຫາທີ່ພົ້ນເດັ່ນ ດັ່ງນີ້:

- ໂຄງການເງິນກູ້ຢືມ ແລະ ຊ່ວຍເຫລືອລ້າ ຍັງສືບຕໍ່ລະເມີດວິໄນການເງິນ ເປັນຕົ້ນການໃຊ້ຈ່າຍບໍ່ໄປຕາມແຜນການປະຈໍາປີ, ການຄິດໄລ່ ແລະເບີກຈ່າຍນໍ້າມັນລົດບໍລິຫານ,ອັດຕາກິນ ແລະ ຄ່າກະກຽມເອກະສານບໍ່ຖືກຕາມການກໍານົດໝາຍ ແລະ ການຈັດຊື້-ຈັດຈ້າງ ບໍ່ໄປຕາມຂັ້ນຕອນຂອງກົດໝາຍແລະບັນຫາອື່ນໆ;

- ວິສາຫະກິດລັດລົງທຶນຈໍານວນໜຶ່ງຍັງສືບຕໍ່ລະເມີດວິໄນການເງິນ ເປັນຕົ້ນບໍ່ສະຫລຸບລາຍຮັບ ແລະ ໜີ້ຕ້ອງຮັບ, ບໍ່ນໍາໃຊ້ໃບເກັບເງິນ, ການຈັດຊື້-ຈັດຈ້າງ ບໍ່ໄປຕາມຂັ້ນຕອນຂອງກົດໝາຍ, ຍັງມີຫລາຍໂຄງການທີ່ຄ້າງມອບພັນທະ-ອາກອນກໍາໄລ ແລະ ບັນຫາອື່ນໆ.

ສ່ວນຂໍ້ມູນລະອຽດໄດ້ລະບຸແຈ້ງໃນເອກະສານລາຍງານຂັດຕິດຂອງອົງການກວດສອບແຫ່ງລັດ.

4) ວຽກງານຍົກສູງຄຸນນະພາບວຽກງານກວດສອບ

ທີ່ພົ້ນເດັ່ນເປັນຕົ້ນແມ່ນ:

- ໄດ້ຄົ້ນຄວ້າ ແລະ ປັບປຸງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ແລະ ສາມາດທັນສະເໜີຜ່ານກອງປະຊຸມສະໄໝເທື່ອທີ 4 ນີ້;

- ສ້າງນັກກວດກສອບຂັ້ນ 1 ໄດ້ 45 ຄົນ;

- ສໍາເລັດການຄົ້ນຄວ້າວຽກງານການກວດສອບທັນສູ່ລະບົບທີ່ທັນສະໄໝ ຈໍານວນ 11 ກິດຈະກໍາ ເພື່ອຂໍທຶນຊ່ວຍເຫລືອຈາກ ສສ.ຫວຽດນາມ.

ຄຽງຄູ່ກັບຜົນສໍາເລັດຂ້າງເທິງນັ້ນ, ຜ່ານການຕິດຕາມກວດກາ, ຄະນະປະຈໍາສະພາແຫ່ງຊາດ ເຫັນມີບາງຂໍ້ຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ເອົາໃຈໃສ່ປັບປຸງແກ້ໄຂ ດັ່ງນີ້:

(1) ການປະຕິບັດແຜນກວດສອບ ບັນລຸໄດ້ພຽງ 94% ຂອງເປົ້າໝາຍກວດສອບ ໃນປີ 2022. ໃນນັ້ນ, ຍັງບໍ່ທັນໄດ້ກວດສອບ 4 ເປົ້າໝາຍທີ່ໄດ້ກໍານົດໃນມະຕິສະພາແຫ່ງຊາດ ຕາມການສະເໜີຂອງກອງປະຊຸມສະພາແຫ່ງຊາດ ຄື:

1) ກວດສອບການຄຸ້ມຄອງບໍລິຫານກອງທຶນລຶບລ້າງຄວາມທຸກຍາກ;

2) ກວດສອບການຄຸ້ມຄອງບໍລິຫານງົບປະມານຮັບໃຊ້ການຕ້ານ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19;

3) ກວດສອບການຄຸ້ມຄອງບໍລິຫານກອງທຶນປະກັນສັງຄົມ;

4) ກວດສອບການຄຸ້ມຄອງບໍລິຫານ ກອງທຶນຄົ້ນຄວ້າວິທະຍາສາດ.

(2) ຍັງບໍ່ທັນຜັນຂະຫຍາຍບາງມາດຕາຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດເປັນນິຕິກໍາໃຕ້ກົດໝາຍໃຫ້ຈະແຈ້ງເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດໃຫ້ມີຄວາມສອດຄ່ອງກັບສະພາບຕົວຈິງ, ມີປະສິດຕິພາບ ແລະ ປະສິດທິຜົນເທົ່າທີ່ຄວນ ເປັນຕົ້ນມາດຕາ 11 ກ່ຽວກັບບ່ອນອີງຂອງການອອກຂໍ້ຕົກລົງກວດສອບ, ມາດຕາ 19 ກ່ຽວ ກັບການແກ້ໄຂການລະເມີດ, ມາດຕາ 22 ກ່ຽວກັບປະເພດການກວດສອບແຫ່ງລັດ, ມາດຕາ 51 ຜູ້ຮ່ວມງານກວດສອບ ແລະ ມາດຕາ 52 ສະພາທີ່ປຶກສາການກວດສອບແຫ່ງລັດ;

(3) ການແກ້ໄຂຜົນການສອບ ເມື່ອທຽບກັບຜົນກວດສອບຕົວຈິງຍັງເຮັດໄດ້ໜ້ອຍ ເປັນຕົ້ນແມ່ນລາຍຈ່າຍລ່ວງໜ້າຄັງເງິນແຫ່ງຊາດໄດ້ພຽງ 3,31%, ໜີ້ຕ້ອງຮັບ ໄດ້ 6,06%, ເງິນຍອດເຫລືອຈ່າຍບໍ່ໝົດພຽງ 5,72%; ການແກ້ໄຂ ຜົນການກວດສອບໃນຫລາຍກໍລະນີເຫັນວ່າຍັງບໍ່ທັນເປັນເອກະພາບ ລະຫວ່າງອົງການຄຸ້ມຄອງ ແລະ ເປົ້າໝາຍຖືກກວດສອບ ໃນການແກ້ໄຂບັນຫາ ແລະ ໃນຫລາຍກໍລະນີເປົ້າໝາຍການກວດສອບຍັງບໍ່ທັນຍົກສູງຄວາມຮັບຜິດຊອບ ແກ້ໄຂບັນຫາຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການກວດສອບແຫ່ງລັດ ມາດຕາ 56 ໃຫ້ມີຜົນສັກສິດເທົ່າທີ່ຄວນ;

(4) ການປະສານງານ ລະຫວ່າງອົງການກວດສອບແຫ່ງລັດ ກັບພາກສ່ວນກ່ຽວຂ້ອງຍັງບໍ່ທັນກົມກຽວ ແລະ ທັນການ ເປັນຕົ້ນການສະໜອງເອກະສານກວດສອບໃຫ້ສະພາແຫ່ງຊາດ ຍັງບໍ່ທັນເວລາ ແລະ ຄົບຖ້ວນຕາມກໍານົດໃນກົດໝາຍວ່າດ້ວຍສະພາແຫ່ງຊາດ ມາດຕາ 63 ທີ່ໄດ້ກໍານົດວ່າເອກະສານທີ່ຈະນໍາເຂົ້າພິຈາລະນາໃນກອງປະຊຸມສະພາແຫ່ງຊາດ ຕ້ອງສົ່ງໃຫ້ສະມາຊິກສະພາແຫ່ງຊາດ ຢ່າງຊ້າ 15 ວັນ ກ່ອນວັນເປີດກອງປະຊຸມສະພາແຫ່ງຊາດ ສະໄໝສາມັນ;

(5) ການປັບປຸງກົງຈັກການຈັດຕັ້ງຂອງອົງການກວດສອບແຫ່ງລັດ ໂດຍສະເພາະອົງການກວດສອບປະຈໍາພາກ ເຫັນວ່າຍັງບໍ່ທັນຕອບສະໜອງທັນກັບຄວາມຕ້ອງການໃນການປະຕິບັດໜ້າທີ່ການເມືອງ, ການບໍາລຸງຍົກລະດັບຄວາມສາມາດຂອງນັກກວດສອບ ທາງດ້ານປະລິມານ, ຈໍານວນນັກກວດສອບ ແລະ ຄຸນະພາບ, ທາງດ້ານວິຊາສະເພາະທີ່ເປັນມືອາຊີບ ຍັງບໍ່ທັນຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການຈັດຕັ້ງປະຕິບັດວຽກງານກວດສອບໄລຍະໃໝ່;

(6) ການທັນການກວດສອບໃຫ້ເປັນທັນສະໄໝ (E-Audit) ຍັງບໍ່ທັນສໍາເລັດຕາມແຜນການ;

2. ທິດທາງແຜນການເຄື່ອນໄຫວ ປະຈໍາປີ 2023

ຄະນະປະຈໍາສະພາແຫ່ງຊາດ ເຫັນດີຕໍ່ທິດທາງແຜນການເຄື່ອນໄຫວວຽກງານປະຈໍາປີ 2023 ຂອງອົງການກວດສອບແຫ່ງລັດ ເຊິ່ງໄດ້ກໍານົດ 7 ທິດທາງລວມ, 6 ຄາດໝາຍສູ້ຊົນ, 7 ວຽກຈຸດສຸມ ແລະ 5 ມາດຕະການຈັດຕັ້ງປະຕິບັດທີ່ອົງການກວດສອບແຫ່ງລັດ ໄດ້ສະເໜີຕໍ່ກອງປະຊຸມຄັ້ງນີ້.

ພ້ອມກັນນີ້, ຄະນະປະຈໍາສະພາແຫ່ງຊາດ ມີບາງຄໍາເຫັນ ແລະ ຂໍ້ສະເໜີໃຫ້ອົງການກວດສອບແຫ່ງລັດເອົາໃຈໃສ່ຕື່ມ ດັ່ງນີ້:

1. ຕໍ່ຄາດໝາຍສູ້ຊົນ, ຄະນະປະຈໍາສະພາແຫ່ງຊາດ ສະເໜີໃຫ້ກໍານົດຄາດໝາຍສູ້ຊົນຕື່ມ ດັ່ງນີ້:

1) ກໍານົດ 4 ເປົ້າໝາຍ ທີ່ຍັງບໍ່ໄດ້ຈັດຕັ້ງປະຕິບັດໃນປີ 2022 ເຂົ້າໃນຄາດໝາຍແຜນການ ປີ 2023 ຄື:

(1) ກວດສອບການຄຸ້ມຄອງບໍລິຫານ ກອງທຶນລຶບລ້າງຄວາມທຸກຍາກ;

(2) ກວດສອບການຄຸ້ມຄອງບໍລິຫານ ງົບປະມານຮັບໃຊ້ການຕ້ານ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19;

(3) ກວດສອບການຄຸ້ມຄອງບໍລິຫານກອງທຶນປະກັນສັງຄົມ;

(4) ກວດສອບການຄຸ້ມຄອງບໍລິຫານກອງທຶນຄົ້ນຄວ້າວິທະຍາສາດ;

2) ສະເໜີໃຫ້ກໍານົດ 2 ເປົ້າໝາຍໃຫຍ່ເຂົ້າໃນແຜນປີ 2023 ຄື:

(1) ກວດສອບການສະຫລຸບຂາດຕົວແຜນງົບປະມານ ປີ 2022;

(2) ກວດສອບ ລາຍຈ່າຍລົງທຶນຂອງລັດບ້ວງອື່ນໆ ເປັນຕົ້ນກອງທຶນທາງ, ການທັນຊຸ້ນ ສິນເປັນທຶນ, ຈົດຮັບຈົດຈ່າຍ ແລະ ບ້ວງອື່ນໆທີ່ໄດ້ກໍານົດໃນມະ ຕິສະພາແຫ່ງຊາດ ກ່ຽວກັບແຜນງົບປະມານ ປີ 2021 ແລະ 2022;

(3) ກວດສອບແຜນລາຍຈ່າຍບ້ວງບໍລິຫານປົກກະຕິ ປີ 2021 ແລະ 2022.

2. ຕໍ່ມາດຕະການຈັດຕັ້ງປະຕິບັດ, ຄະນະປະຈໍາສະພາແຫ່ງຊາດ ສະເໜີໃຫ້ເອົາໃຈໃສ່ ດັ່ງນີ້:

1) ສືບຕໍ່ແກ້ໄຂຂໍ້ຄົງຄ້າງໃນການເຄື່ອນໄຫວວຽກງານຂອງອົງການກວດສອບແຫ່ງລັດ ແລະ ສືບຕໍ່ຈັດຕັ້ງປະຕິບັດບັນດາເປົ້າໝາຍ ແລະ ແຜນວຽກຈຸດສຸມທີ່ບໍ່ທັນຈັດຕັ້ງປະຕິບັດໃນປີ 2022 ໃຫ້ສໍາເລັດໃນປີ 2023;

2) ເອົາໃຈໃສ່ສ້າງນັກກວດສອບໃຫ້ໄດ້ຕາມແຜນ, ທັງທາງດ້ານປະມານ ແລະ ຄຸນນະພາບ ໃຫ້ເປັນມືອາຊີບເທື່ອລະກ້າວເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານກວດສອບມີປະສິດທິພາບ ແລະ ຄຸນນະພາບສູງຂຶ້ນ

3) ເອົາໃຈໃສ່ທັນວຽກງານການກວດສອບໃຫ້ເປັນທັນສະໄໝ (E-Audit) ໃຫ້ສໍາເລັດຕາມແຜນ;

4) ເອົາໃຈໃສ່ສົມທົບກັບກໍາມາທິການກ່ຽວຂ້ອງຂອງ ສະພາແຫ່ງຊາດ ແລະ ລັດຖະບານ ຮຽບຮຽງ ແລະ ປັບປຸງ ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ສະບັບປັບປຸງ ທີ່ໄດ້ສະເໜີຜ່ານກອງປະຊຸມສະໄໝສາມັນເທື່ອທີ 4 ໃຫ້ສໍາເລັດໄວ.

5) ເອົາໃຈໃສ່ຕິດຕາມກວດກາ ແລະ ຊຸກຍູ້ສົ່ງເສີມການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ນັກກວດສອບ ຢ່າງໃກ້ຊິດ ເພື່ອຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງພະນັກງານແຕ່ລະຄົນ, ເອົາໃຈໃສ່ບໍາລຸງກໍ່ສ້າງທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ຈັນຍາບັນ, ຈັນຍາທໍາ ຂອງພະນັກງານກວດສອບ ໃຫ້ມີຄຸນນະພາບ ແລະ ມີຄວາມໜັກແໜ້ນ;

6) ເອົາໃຈໃສ່ຈັດຕັ້ງປະຕິບັດ ກົນໄກປະສານງານ ລະຫວ່າງ ອົງການກວດສອບແຫ່ງລັດ ແລະ ອົງການກວດສອບປະຈໍາພາກ; ອົງການກວດສອບແຫ່ງລັດ ກັບ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ລັດຖະບານ, ອົງການກວດກາແຫ່ງລັດ, ໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ບັນດາອົງການຄຸ້ມຄອງເປົ້າໝາຍກວດສອບຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມຄ່ອງຕົວ, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະ ຕິບັດໃຫ້ເປັນເອກະພາບ, ມີປະສິດຕິພາບ ແລະ ປະສິດທິຜົນ.

3. ຕໍ່ມາດຕະການແນະນໍາປັບປຸງແກ້ໄຂຜົນການກວດສອບ

ຄະນະປະຈໍາສະພາແຫ່ງຊາດ ເຫັນດີ ຕໍ່ມາດຕະການແນະນໍາປັບປຸງແກ້ໄຂຜົນການກວດສອບຕາມການສະເໜີຂອງອົງການກວດສອບແຫ່ງລັດ ໃນນັ້ນ: ມີ 5 ມາດຕະການລວມ, ຕໍ່ກະຊວງການເງິນ ມີ 12 ມາດຕະການ, ຕໍ່ກະຊວງແຜນການ ແລະ ການລົງທຶນ ມີ 6 ມາດຕະການ, ຕໍ່ທະນາຄານ ແຫ່ງ ສປປລາວ ມີ 8 ມາດຕະການ, ຕໍ່ບັນດາຫົວໜ່ວຍງົບ ປະມານ, ບັນດາແຂວງ ແລະ ນະຄອນຫລວງວຽງຈັນ ມີ 25 ມາດຕະການ, ຕໍ່ວິສາຫະກິດລັດລົງ ທຶນມີ 12 ມາດຕະການ ແລະ ຕໍ່ອົງການຄຸ້ມຄອງ ໂຄງການເງິນກູ້ຢືມ ແລະ ຊ່ວຍເຫລືອລ້າ ມີ 6 ມາດຕະການ.

ເພື່ອຮັບປະກັນການປະຕິບັດແຜນການເຄື່ອນໄຫວຂອງອົງການກວດສອບແຫ່ງລັດ ໃຫ້ມີປະສິດທິພາບ ແລະ ຄຸນນະພາບສູງຂຶ້ນ, ຄະນະປະຈໍາສະພາແຫ່ງຊາດ ສະເໜີອົງການກວດສອບແຫ່ງລັດ ເອົາໃຈໃສ່ບາງມາດຕະການເພີ່ມຕື່ມ ດັ່ງນີ້:

1) ເປັນເຈົ້າການປະສານສົມທົບກັບກະຊວງການເງິນ, ອົງການກວດກາແຫ່ງລັດ ແລະ ພາກສ່ວນທີ່ກ່ຽວຂ້ອງໄຈ້ແຍກລາຍຮັບ-ລາຍຈ່າຍທີ່ກວດເຫັນເພີ່ມ ໃນປີ 2021 ແລະ ໜີ້ຕ້ອງຮັບທີ່ສະສົມຜ່ານມາໃຫ້ລະອຽດ ອັນໃດທີ່ສາມາດເກັບກູ້ຄືນໄດ້ ໃຫ້ເອົາເຂົ້າແຜນງົບປະ ມານ ປະຈໍາປີ 2023 ເພື່ອສະເໜີສະພາແຫ່ງຊາດ ພິຈາລະນາເຂົ້າໃນແຜນດັດແກ້ງົບປະມານ 6 ເດືອນ ທ້າຍປີ 2023 ແລະ ຜົນການກວດສອບທີ່ສະສົມມາຫລາຍປີອັນໃດບໍ່ສາມາດເກັບຄືນໄດ້ ຫລື ບໍ່ມີຕົວຕົນແລ້ວ ໃຫ້ສະເໜີກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ຄັ້ງຕໍ່ໄປພິຈາລະນາຕາມຄວາມເໝາະສົມ ໂດຍສອດຄ່ອງຕາມກົດໝາຍ;

2) ໃຫ້ຄົ້ນຄວ້າມາດຕະຖານການກວດສອບທີ່ໄດ້ກໍານົດກອບຄວາມ ຜິດດ່ຽງຂອງການກວດ ສອບສະຫລຸບຂາດຕົວຂອງອົງການກວດສອບ ແລະ ການລາຍງານຂອງກະຊວງການເງິນ ລະຫວ່າງ 0,5-2% ເຂົ້າໃນກົດໝາຍວ່າດ້ວຍການກວດສອບແຫ່ງລັດ ຫລື ເຂົ້າໃນນິຕິກໍາໃຕ້ກົດໝາຍເພື່ອເປັນບ່ອນອີງທີ່ຊັດເຈນທາງດ້ານກົດໝາຍ ສໍາລັບການພິຈາລະນາຮັບຮອງການ ສະຫລຸບຂາດຕົວຂອງກະຊວງການເງິນ ໃຫ້ສອດຄ່ອງຕາມມາດຕະຖານການກວດສອບ, ເນື່ອງຈາກມາດຕະຖານດັ່ງກ່າວຍັງແມ່ນອີງຕາມມາດຕະຖານສາກົນ ແລະ ບໍ່ທັນເຂົ້າໃນກົດໝາຍ ຫລື ນິຕິກໍາໃຕ້ກົດໝາຍທີ່ຈະແຈ້ງເທື່ອ;

3) ເອົາໃຈໃສ່ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການກວດສອບແຫ່ງລັດ ມາດຕາ 19 ທີ່ໄດ້ກໍານົດ: ທຸກການກະທໍາ ເຊິ່ງເປັນການລະເມີດກົດໝາຍທີ່ໄດ້ພົບເຫັນຈາກຜົນການກວດສອບແຫ່ງລັດ ຕ້ອງໄດ້ຮັບການແກ້ໄຂຢ່າງທັນເວລາ ແລະ ເຂັ້ມງວດເປັນຕົ້ນ:

- ການລະເມີດທາງດ້ານບໍລິຫານ;

- ການລະເມີດທາງແພ່ງ;

- ການລະເມີດທາງອາຍາ.

ໂດຍສົມທົບກັບໃຫ້ອົງການລັດທີ່ກ່ຽວຂ້ອງດໍາເນີນຕາມຂັ້ນຕອນຂອງກົດໝາຍ ໃຫ້ມີຜົນສັກສິດ.

**II. ຕໍ່ບົດລາຍງານຂອງອົງການກວດກາແຫ່ງລັດ**

ຄະນະປະຈໍາສະພາແຫ່ງຊາດ ເຫັນດີ ຕໍ່ບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈໍາປີ 2022 ແລະ ທິດທາງແຜນການ ປະຈໍາປີ 2023.

1. ຕໍ່ພາກສະຫລຸບການເຄື່ອນໄຫວວຽກງານ ປະຈໍາປີ 2022

ຄະນະປະຈໍາສະພາແຫ່ງຊາດ ສະແດງຄວາມຊົມເຊີຍ ຕໍ່ອົງການກວດກາແຫ່ງລັດ ທີ່ໄດ້ມີ ຄວາມພະຍາຍາມ ປະຕິບັດແຜນການເຄື່ອນໄຫວປະຈໍາປີ 2022 ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ເຊິ່ງສາມາດຍາດໄດ້ຜົນສໍາເລັດ ຫລາຍດ້ານດັ່ງທີ່ປະທານອົງການກວດກາໄດ້ລາຍງານໄປແລ້ວນັ້ນ, ໃນນັ້ນທີ່ພົ້ນເດັ່ນ ເປັນຕົ້ນ:

1) ໄດ້ຄົ້ນຄວ້າ ແລະ ປັບປຸງກົດໝາຍວ່າດ້ວຍ ການກວດກາລັດ ແລະ ສາມາດນໍາສະເໜີຜ່ານກອງປະຊຸມສະພາແຫ່ງຊາດ ສະໄໝສາມັນເທື່ອທີ 4 ນີ້;

2) ສໍາເລັດການປັບປຸງພາລະບົດບາດ ຂອງອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫລວງ, ພາລະບົດບາດຂອງຄະນະກວດກາກະຊວງ-ອົງການ ແລະ ທ້ອງຖິ່ນ;

3) ໄດ້ປະຕິບັດການກວດກາຕາມມະຕິສະພາແຫ່ງຊາດ ເລກທີ 24/ສພຊ, ລົງວັນທີ 16 ພະຈິກ 2021;

4) ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ຈໍານວນ 9 ໂຄງການ;

5) ກວດກາຕາມຄໍາສັ່ງ ແລະ ແຈ້ງການ ຈໍານວນ 5 ເປົ້າໝາຍ.

ຜົນການກວດກາລະອຽດລະອຽດຕາມການລາຍງານຂອງປະທານອົງການກວດກາໄປແລ້ວນັ້ນ, ຄຽງຄູ່ກັບຜົນສໍາເລັດດັ່ງກ່າວນັ້ນ, ຜ່ານການຕິດຕາມກວດກາຂອງຄະນະປະຈໍາສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ ເຫັນວ່າຍັງມີບາງຂໍ້ຄົງຄ້າງ ເຊິ່ງຈະໄດ້ສືບຕໍ່ແກ້ໄຂ ດັ່ງນີ້:

10 ການຄົ້ນຄວ້າສ້າງ, ປັບປຸງກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ກ່ຽວກັບວຽກງານກວດກາທີ່ເປັນບ່ອນອີງ ແລະ ເປັນເຄື່ອງມືຮັບໃຊ້ການປະຕິບັດວຽກງານກວດກາໃນບາງດ້ານເຫັນວ່າຍັງຊັກຊ້າ, ການໂຄສະນາ, ເຜີຍແຜ່ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍໃນຂົງເຂດຂອງຕົນ ໃຫ້ພະນັກງານ, ທະຫານ, ຕໍາຫລວດ ແລະ ປະຊາຊົນຮັບຮູ້, ເຂົ້າໃຈ ບໍ່ທັນທົ່ວເຖິງ ແລະ ເລິກເຊິ່ງເທົ່າທີ່ຄວນ;

2) ຍັງບໍ່ທັນໄດ້ກວດກາເປົ້າໝາຍຕາມມະຕິຂອງສະພາແຫ່ງຊາດ ເລກທີ 24/ສພຊ, ລົງວັນທີ 16 ພະຈິກ 2021 ຈໍານວນໜຶ່ງ ເປັນຕົ້ນກວດກາການຍົກເວັ້ນພາສີ-ອາກອນຈາການນໍາເຂົ້ານໍ້າ ມັນເຊື້ອໄຟ ແລະ ກວດກາການປະຕິຮູບທະນາຄານທຸ

ອ່ານຕໍ່ສະບັບໜ້າ...

# ລາຍງານຄວາມຄືບໜ້າການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ

**ອ່ານຕໍ່ຈາກສະບັບກ່ອນ...**

- ວຽກງານການສົ່ງເສີມການຜະລິດ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ເພື່ອສ້າງຖານລາຍຮັບທີ່ເຂັ້ມແຂງ ແລະ ຍືນຍົງ; ສືບຕໍ່ປັບປຸງບັນດາກົນໄກ, ຂອດຂັ້ນການບໍລິການ ແລະ ອະນຸຍາດການລົງທຶນ ແລະ ການດຳເນີນທຸລະກິດໃຫ້ເປັນຮູບປະທຳຫລາຍຂຶ້ນ; ເພີ່ມທະວີການສົ່ງເສີມ ແລະ ສ້າງເງື່ອນໄຂການຜະລິດເປັນກຸ່ມໂດຍສະເພາະໂຄງການຜະລິດພືດ ແລະ ສັດ ທີ່ໄດ້ເຈລະຈາເປີດຕະຫລາດສົ່ງອອກແລ້ວ ໂດຍຍູ້ແຮງການຜະລິດຈາກປັດໄຈການຜະລິດ, ປຸງແຕ່ງ ໄປເຖິງຂອດຕະຫລາດ. ເລັ່ງປັບປຸງຂອດການປະສານງານ ແລະ ແລກປ່ຽນຂໍ້ມູນລະຫວ່າງພາກລັດ ແລະ ເອກະຊົນ ໃນການຊຸກຍູ້ການຜະລິດພາຍໃນ, ພ້ອມທັງເລັ່ງແກ້ໄຂຂອດຫຍຸ້ງຍາກໃນການຈໍລະຈອນສິນຄ້າພາຍໃນປະເທດ ຊຸກຍູ້ການລົງທຶນເຂົ້າໃສ່ໂຄງລ່າງພື້ນຖານຜະລິດກະສິກຳ ເຊັ່ນ: ລະບົບສາງ, ໂຮງອົບ ແລະ ອື່ນໆ. ສຸມໃສ່ຕິດຕາມການຄ້າຂາຍຕາມຊາຍແດນ-ການນຳເຂົ້າສິນຄ້າ ແລະ ປະຕິບັດນະໂຍບາຍອຸດໜູນດ້ານຕ່າງໆໃຫ້ແກ່ຫົວໜ່ວຍການຜະລິດທີ່ໄດ້ກຳນົດໄວ້ໃນລາຍການສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ, ເລັ່ງປັບປຸງການອຳນວຍຄວາມສະດວກດ້ານການຄ້າ ແລະ ແກ້ໄຂບັນຫາລະບົບການຂົນສົ່ງສິນຄ້າໄປຕ່າງປະເທດຢູ່ດ່ານຕ່າງໆ ຢ່າງເປັນລະບົບ, ອີກດ້ານໜຶ່ງ, ຄວນເລັ່ງໂຄສະນາການທ່ອງທ່ຽວຜ່ານຊ່ອງທາງຕ່າງໆຫລາຍຂຶ້ນ ແລະ ປັບປຸງໂຄງລ່າງພື້ນຖານ ແລະ ການບໍລິການທ່ອງທ່ຽວໃຫ້ດີກວ່າເກົ່າ.

- ວຽກງານການສ້າງຄວາມເຂັ້ມແຂງດ້ານການເກັບລາຍຮັບງົບປະມານ: ສືບຕໍ່ປະຕິຮູບກົນໄກການຄຸ້ມຄອງເກັບລາຍຮັບຕາມທິດຄຳສັ່ງເລກທີ 18/ນຍ; ເລັ່ງຂະຫຍາຍຖານຈັດເກັບລາຍຮັບຜ່ານລະບົບ ແລະ ເຄື່ອງມືທັນສະໄໝໃຫ້ຫລາຍກວ່າເກົ່າ ແລະ ເລັ່ງເຊື່ອມຖານຂໍ້ມູນກັບຂະແໜງການຄຸ້ມຄອງແຫລ່ງລາຍຮັບໃຫ້ສຳເລັດ; ເລັ່ງປັບປຸງກົນໄກ ແລະ ເງື່ອນໄຂໃນການເກັບຖານລາຍຮັບທີ່ໝັ້ນຄົງ ເຊັ່ນ: ອາກອນທີ່ດິນ, ອາກອນຊັບສິນ; ປັບຂຶ້ນອາກອນສິນຄ້າຟຸ່ມເຟືອຍ ແລະ ອື່ນໆ. ນອກຈາກນັ້ນ, ປະເມີນຄືນບັນດາໂຄງການທົດລອງຂຸດຄົ້ນແຮ່ທາດ ແລະ ໂຄງການທົດລອງການດຳເນີນທຸລະກິດຊື້-ຂາຍເງິນຄຣິບໂຕ ໂດຍສົມທຽບລະຫວ່າງລາຍຮັບທີ່ມອບພັນທະໃຫ້ງົບປະມານ ແລະ ຜົນກະທົບທີ່ເກີດຂຶ້ນ, ພ້ອມທັງເລັ່ງທວງລາຍຮັບທີ່ໂຄງການຍັງຄ້າງຊຳລະ ແລະ ເລັ່ງຊຸກຍູ້ໃຫ້ມີການສົ່ງອອກຫລາຍຂຶ້ນ ໃນປີ 2023, ໃນນັ້ນ, ຄວນຄົ້ນຄວ້າຄືນເງື່ອນໄຂຂອງການເກັບພັນທະລາຍຮັບຈາກໂຄງການທົດລອງຂຸດຄົ້ນແຮ່ທາດ ໃຫ້ສອດຄ່ອງຕາມແຕ່ລະໄລຍະ, ສະພາບລາຄາຕົວຈິງຂອງຕະຫລາດສາກົນ ແລະ ເງື່ອນໄຂສະເພາະຂອງແຕ່ລະປະເພດຂອງແຮ່ທາດ ເພື່ອຊຸກຍູ້ໃຫ້ມີການສົ່ງອອກ ແລະ ສ້າງລາຍຮັບເຂົ້າງົບປະມານຢ່າງຕໍ່ເນື່ອງ.

- ວຽກງານການສົ່ງເສີມການປະຢັດ, ຕ້ານການຟູມເຟືອຍ, ຍົກສູງປະສິດທິຜົນການລົງທຶນ-ລາຍຈ່າຍງົບປະມານ ແລະ ການແກ້ໄຂໜີ້ສິນ: ສືບຕໍ່ຈັດຕັ້ງປະຕິບັດດຳລັດ ວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ ເລກທີ 205/ລບ ແລະ ດຳລັດວ່າດ້ວຍລົດຂອງລັດ ເລກທີ 599/ລບ ໃຫ້ເປັນຮູບປະທຳຫລາຍຂຶ້ນ; ເຂັ້ມງວດປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ກ່ຽວກັບການຄຸ້ມຄອງໂຄງການລົງທຶນຂອງລັດໃຫ້ຮັດກຸມ; ເລັ່ງປັບປຸງຫົວໜ່ວຍລາຄາ ແລະ ຊຸກຍູ້ໃຫ້ໂຄງການທີ່ໄດ້ຮັບການອະນຸມັດຈັດຕັ້ງປະຕິບັດຕາມແຜນການ, ພ້ອມທັງຈັດສັນທຶນຈຳນວນໜຶ່ງໃສ່ໂຄງການລົງທຶນລັດ ຕິດພັນກັບການພັດທະນາຊັບພະຍາກອນມະນຸດ ແລະ ແກ້ໄຂຄວາມທຸກຍາກ; ສືບຕໍ່ຄົ້ນຄວ້າແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ດ້ວຍຮູບແບບຕ່າງໆ ແລະ ເຂັ້ມງວດປະຕິບັດແຜນການຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ຕາມແຜນທີ່ໄດ້ກຳນົດໄວ້. ນອກຈາກນັ້ນ, ເລັ່ງປະຕິຮູບລັດວິສາຫະກິດທີ່ເປັນບຸລິມະສິດ ແລະ ນອນຢູ່ໃນແຜນລັດຖະບານໃຫ້ໄປຕາມແຜນປະຕິຮູບໃຫ້ໄດ້ໄວ.

- ວຽກງານການສ້າງສະຖຽນລະພາບດ້ານເງິນຕາ ດຳເນີນນະໂຍບາຍເງິນຕາໃຫ້ຮັດກຸມກວ່າເກົ່າ ໂດຍເນັ້ນໃສ່ການຄຸ້ມຄອງປະລິມານເງິນ (M2); ແກ້ໄຂບັນຫາອັດຕາແລກປ່ຽນ ແລະ ອັດຕາເງິນເຟີ້ ໂດຍສືບຕໍ່ປັບປຸງນິຕິກຳການຄຸ້ມຄອງເງິນຕາຕ່າງປະເທດແລະບັງຄັບໃຊ້ໃຫ້ເຂັ້ມງວດ, ເພີ່ມທະວີການຄຸ້ມຄອງບັນດາຮ້ານແລກປ່ຽນໃຫ້ເປັນຕົວແທນທະນາຄານທຸລະກິດ (ໜ່ວຍບໍລິການ-ປ່ອງບໍລິການ) ຫລາຍຂຶ້ນ, ເລັ່ງຄຸ້ມຄອງກະແສເງິນຕາຕ່າງປະເທດຜ່ານການຄ້າ-ລົງທຶນຕ່າງປະເທດ, ການກູ້ຢືມລະຫວ່າງປະເທດ ແລະ ການຄ້າຊາຍແດນໃຫ້ຮັດກຸມ; ສືບຕໍ່ຄົ້ນຄວ້າກົນໄກການກຳນົດໂຄງສ້າງລາຄາສິນຄ້າ, ຕິດຕາມ ແລະ ຄຸ້ມຄອງລາຄາສິນຄ້າ ຢ່າງເປັນປົກກະຕິ; ຊຸກຍູ້ໃຫ້ບັນດາວິສາຫະກິດ MSME ຖືບັນຊີເພື່ອສ້າງເງື່ອນໄຂໃນການເຂົ້າເຖິງແຫລ່ງທຶນ, ໄປຄຽງຄູ່ກັບການຂະຫຍາຍໂຄງການສິນເຊື່ອ ແລະ ຊອກຫາແຫລ່ງທຶນຕື່ມຈາກຄູ່ຮ່ວມພັດທະນາ ເພື່ອສະໜອງທຶນເພີ່ມໃຫ້ MSME, ທຸລະກິດສົ່ງອອກ, ການບໍລິການ ແລະ ທ່ອງທ່ຽວ, ເລັ່ງຄົ້ນຄວ້າ ແລະ ປະຕິບັດໂຄງການນະໂຍບາຍສິນເຊື່ອຖົມຊຸມດອກເບ້ຍ ແລະ ໂຄງການສິນເຊື່ອກະຈ່າຍແຫລ່ງທຶນສູ່ທ້ອງຖິ່ນ ທີ່ ທຫລ ກຳລັງສ້າງແຜນດຳເນີນການ.

- ວຽກງານການຍົກສູງປະສິດທິພາບການຄຸ້ມຄອງລັດດ້ວຍກົດໝາຍ ສືບຕໍ່ກວດກາຄືນບັນດາກົດໝາຍ ແລະ ນິຕິກຳກຸ່ມກົດໝາຍ ເພື່ອປັບປຸງ ແລະ ສະເໜີສະພາຮັບຮອງ ໂດຍເລັ່ງໃສ່ປັບປຸງກົດໝາຍທີ່ຕິດພັນກັບວາລະແຫ່ງຊາດ ໃນຂົງເຂດເສດຖະກິດ, ການຄ້າ, ການລົງທຶນ, ເລັ່ງປະເມີນຄືນການເຮັດທົດລອງຫັນຫົວໜ່ວຍງົບປະມານກຸ້ມຕົນເອງ ແລະ ຂະຫຍາຍໄປສູ່ຂະແໜງຕ່າງໆໃຫ້ໄດ້ໄວ; ສືບຕໍ່ປັບປຸງຄວາມສາມາດການປະຕິບັດໜ້າທີ່ການເມືອງຂອງບັນດາກະຊວງ, ອົງການລັດທຽບເທົ່າ ຕະຫລອດຮອດອົງການປົກຄອງທ້ອງຖິ່ນໃຫ້ດີຂຶ້ນກວ່າເກົ່າດ້ວຍການກວດກາ, ປະເມີນ ແລະ ປັບປຸງເປັນແຕ່ລະໄລຍະ ເລັ່ງການຫັນຫົວໜ່ວຍວິຊາການທີ່ມີລາຍຮັບໄປສູ່ການກຸ້ມຕົນເອງໃຫ້ໄດ້ຕາມແຜນ.

● **ມາດຕະການ:** ແມ່ນຊຸກຍູ້ການຈັດຕັ້ງປະຕິບັດວຽກຈຸດສຸມການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃນໄລຍະຕໍ່ໜ້າ ຄວນສຸມໃສ່ ຄື:

- ດຳເນີນການປະເມີນການຈັດຕັ້ງປະຕິບັດວາລະແຫ່ງຊາດຂອງບັນດາກະຊວງ, ອົງການສູນກາງ ແລະ ທ້ອງຖິ່ນ ເພື່ອສະຫລຸບຖອດຖອນບົດຮຽນ ແລະ ກຳນົດທິດທາງແຜນການສືບຕໍ່ໂດຍສຸມໃສ່ແກ້ໃຫ້ມີໝາກຜົນຕົວຈິງ ຕໍ່ກັບບັນດາບັນຫາຂໍ້ຄົງຄ້າງຊອກໃຫ້ເຫັນສາເຫດ ແລະ ບົດຮຽນຕ່າງໆເພື່ອສືບຕໍ່ຜັນຂະຫຍາຍໃນຕໍ່ໜ້າ;

- ຊຸກຍູ້ໃຫ້ແຕ່ລະຂະແໜງການເລັ່ງຄົ້ນຄວ້າກຳນົດບຸລິມະສິດຂອງແຕ່ລະວຽກຈຸດສຸມຂອງຕົນຢ່າງລະອຽດ ແລະ ເພີ່ມທະວີຜັນຂະຫຍາຍເປັນວຽກອັນສະເພາະຂອງຂະແໜງການໃຫ້ໄວແຕ່ມີຄຸນນະພາບ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ ໃນໄລຍະ ປີ 2023 ທີ່ຈະມາເຖິງ;

- ເລັ່ງປັບປຸງຂອດຂັ້ນ-ກົນໄກປະສານງານລະຫວ່າງຂະແໜງການ-ທ້ອງຖິ່ນ, ຂະແໜງການ-ຂະແໜງການເພື່ອສາມາດປະຕິບັດໜ້າວຽກໃຫ້ກົມກຽວສອດຄ່ອງກັນຫລາຍຂຶ້ນ;

- ສຸມປັບປຸງກົນໄກ ແລະ ລະບົບການເກັບກຳຂໍ້ມູນ, ແລກປ່ຽນຂໍ້ມູນ ແລະ ລາຍງານລະຫວ່າງຂະແໜງການ ແລະ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນປົກກະຕິ;

- ຈັດສັນງົບປະມານຂອງຂະແໜງການໃນການຈັດຕັ້ງປະຕິບັດວຽກຈຸດສຸມຂອງວາລະແຫ່ງຊາດໃຫ້ເປັນບຸລິມະສິດ ພ້ອມທັງຂົນຂວາຍລະດົມທຶນຈາກອົງການຈັດຕັ້ງສາກົນ ແລະທົ່ວສັງຄົມຕາມຄວາມເໝາະສົມ.

**ລັດຖະມົນຕີ...**

ສານຂອງ ສປປລາວ ແລະ ສາກົນ ເນື່ອງຈາກວ່າ ໄດ້ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານທະບຽນສານ ເພື່ອເຮັດໃຫ້ການຢັ້ງຢືນທະບຽນສານ ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ຕາມກົດໝາຍ ແນໃສ່ເພີ່ມທະວີນິຕິທຳ, ປົກປ້ອງຄວາມຍຸຕິທຳ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນເຂົ້າໃນການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ; ພ້ອມນັ້ນ, ທ່ານຍັງໄດ້ຍົກໃຫ້ເຫັນເຖິງເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງກົດໝາຍວ່າດ້ວຍທະບຽນສານ ຜ່ານການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະບຽນສານ ປີ 2009 ເຫັນວ່າມີດ້ານດີ ກໍຄືຜົນສຳເລັດ ແຕ່ກໍຍັງເຫັນວ່າມີບາງບັນຫາທີ່ຈະຕ້ອງໄດ້ປັບປຸງ ເພື່ອໃຫ້ມີຄວາມສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນປັດຈຸບັນ ດັ່ງນີ້:

1) ເນື້ອໃນຂອງກົດໝາຍບາງມາດຕາ ຍັງບໍ່ທັນຈະແຈ້ງ ເຊິ່ງສາມາດຕີໄດ້ຫລາຍຄວາມໝາຍ ເຮັດໃຫ້ມີຄວາມຄຸມເຄືອ, ຫຍຸ້ງຍາກໃນການຈັດຕັ້ງປະຕິບັດ;

2) ຂອບວຽກງານການຢັ້ງຢືນເອກະສານຍັງບໍ່ທັນຈະແຈ້ງ;

3) ຂັ້ນຕອນການຢັ້ງຢືນສັນຍາ ແລະ ເອກະສານ ຍັງກຳນົດລັກສະນະກວມລວມ, ເຮັດໃຫ້ການປະຕິບັດວຽກງານ ມີລັກສະນະບໍ່ເປັນເອກະພາບກັນ;

4) ກົນໄກການຄຸ້ມຄອງວຽກງານທະບຽນສານ ເປັນຕົ້ນການຄຸ້ມຄອງເອກະສານ ແລະ ການຈັດລະບົບຂໍ້ມູນ ຍັງບໍ່ຮັດກຸມ ແລະ ທັນສະໄໝ;

5) ກົດໝາຍທະບຽນສານ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ທີ່ກຳນົດບັນຫາດຽວກັນ ຍັງມີລັກສະນະແຕກຕ່າງກັນ ເປັນຕົ້ນ ການແຕ່ງຕັ້ງນາຍທະບຽນສານ;

6) ການກຳນົດສິດ ແລະ ໜ້າທີ່ ຂອງພາກສ່ວນຕ່າງໆ ຍັງບໍ່ທັນຈະແຈ້ງ ແລະ ມີລັກສະນະລວມ.

ໂຄງປະກອບຂອງຮ່າງກົດໝາຍວ່າດ້ວຍທະບຽນສານ: ກົດໝາຍວ່າດ້ວຍທະບຽນສານ ສະບັບປີ 2009 ທີ່ນຳໃຊ້ໃນປັດຈຸບັນ ມີ 9 ພາກ, 4 ໝວດ, 45 ມາດຕາ ແຕ່ສຳລັບໂຄງປະກອບຂອງຮ່າງກົດໝາຍປັບປຸງສະບັບນີ້ ປະກອບມີ 9 ພາກ, 9 ໝວດ, 63 ມາດຕາ; ໃນນັ້ນ, ໄດ້ປັບປຸງຄຳສັບ 23 ມາດຕາ, ປັບປຸງເນື້ອໃນ 16 ມາດຕາ, ເພີ່ມໃໝ່ 5 ໝວດ 23 ມາດຕາ ຮັກສາໄວ້ 1 ມາດຕາ, ໂຮມມາດຕາເຂົ້າກັນ 2 ມາດຕາ ແລະ ຕັດອອກ 3 ມາດຕາ.

ສຳລັບເນື້ອໃນຂອງຮ່າງກົດໝາຍ ວ່າດ້ວຍທະບຽນສານ ທີ່ໄດ້ປັບປຸງ ແລະ ເພີ່ມເຂົ້າໃໝ່ ດັ່ງນີ້:

1) ໄດ້ປັບປຸງຄຳສັບ ເຊິ່ງມີ (ມາດຕາ 1, 2, 5, 6, 7, 8, 24, 39, 44, 45, 46, 47, 48, 54, 55, 57, 60 ແລະ 61)

2) ໄດ້ປັບປຸງເນື້ອໃນ ເຊິ່ງມີ (ມາດຕາ 3, 4, 9, 19, 20, 21, 22, 25, 29, 33, 34, 35, 36, 41, 42, 49, 50, 51, 52, 56, 59 (63)

3) ໄດ້ສ້າງມາດຕາໃໝ່ເຊິ່ງມີ (ມາດຕາ 10-18, 23, 26, 27, 28, 30, 31, 32, 37, 38 40, 43, 53 ແລະ 58)

4) ໄດ້ໂຮມມາດຕາເຂົ້າກັນ ເຊິ່ງມີ (ມາດຕາ 13, 14 ແລະ ມາດຕາ 18, 19)

5) ໄດ້ຮັກສາມາດຕາໄວ້ຄືເກົ່າ ເຊິ່ງມີ (ມາດຕາ 62 ການຈັດຕັ້ງປະຕິບັດ)

6) ໄດ້ຕັດມາດຕາ 24, 26 ແລະ 40 ຂອງຮ່າງກົດໝາຍສະບັບ ປີ 2009.

7) ໄດ້ເພີ່ມໝວດເຂົ້າໃໝ່ ເຊິ່ງມີພາກທີ II ວຽກງານທະບຽນສານ, ໝວດທີ 1 ການຢັ້ງຢືນທະບຽນສານ, ໝວດທີ 2 ຂັ້ນຕອນການຢັ້ງຢືນ, ໝວດທີ 3 ລະບົບຂໍ້ມູນ-ຂ່າວສານທະບຽນສານ, ໝວດທີ 4 ການເກັບຮັກສາ ແລະ ການທຳລາຍ, ໝວດທີ 5 ການລຶບລ້າງການຢັ້ງຢືນທະບຽນສານ.

**ປະທານ...**

(ສພຊ) ວັນທີ 22 ທັນວາ 2022 ທີ່ສະພາແຫ່ງຊາດ ນະຄອນຫລວງວຽງຈັນ, ທ່ານ ນາງ ທຸມມາລີ ວົງພະຈັນ, ປະທານກຳມາທິການວັດທະນະທຳ-ສັງຄົມ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທ່ານ ທາເກອິ ຊຸນຊຶເກະ (Takei Shunsuke) ຮອງລັດຖະມົນຕີຕ່າງປະເທດຍີ່ປຸ່ນ ຄົນໃໝ່ ພ້ອມດ້ວຍຄະນະ ເພື່ອແນະນຳຕົວ ແລະ ປຶກສາຫາລືກ່ຽວກັບການເສີມສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ດີງາມ ລະຫວ່າງ ສປປລາວ ແລະ ຍີ່ປຸ່ນ ກໍຄື ການພົວພັນຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດ.



ທ່ານປະທານຄະນະມິດຕະພາບ ລັດຖະສະພາ ລາວ-ຍີ່ປຸ່ນ ໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງ ສອງປະເທດ ໄດ້ຮັບການເສີມຂະຫຍາຍເປັນກ້າວໆ ເຊິ່ງສະແດງອອກດ້ວຍການແລກປ່ຽນຄະນະຜູ້ແທນໄປ-ມາຫາສູ່ກັນ ແລະ ການຊ່ວຍເຫລືອຕ່າງໆ ເປັນຕົ້ນແມ່ນການພັດທະນາດ້ານພື້ນຖານໂຄງລ່າງ, ດ້ານເສດຖະກິດ, ວັດທະນະທຳ, ການສຶກສາ, ສາທາລະນະສຸກ, ແຮງງານ, ການສົ່ງນັກກົດໝາຍໄປຊ່ວຍສ້າງປະມວນກົດໝາຍອາຍາ ແລະ ກົດໝາຍແພ່ງ, ການສົ່ງອາສາສະໝັກ ແລະ ຊ່ຽວຊານຍີ່ປຸ່ນມາເຮັດວຽກຢູ່ລາວ ສອງຝ່າຍຍັງໄດ້ມີການຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີພາກພື້ນ ແລະ ສາກົນ.

ໃນໂອກາດນີ້, ທ່ານປະທານຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ຍັງໄດ້ໃຫ້ແຈ້ງຊາບສະພາບໂດຍລວມກ່ຽວກັບສະພາແຫ່ງຊາດລາວ ຊຸດທີ IX ເຊິ່ງມີສະມາຊິກສະພາແຫ່ງຊາດ ທັງໝົດ 164 ທ່ານ ຍິງ 36 ທ່ານ ກວມເອົາ 21,95% ຂອງຈຳນວນສະມາຊິກສະພາແຫ່ງຊາດ ທັງໝົດ; ສະພາປະຊາຊົນແຂວງ ຊຸດທີ II ມີສະມາຊິກທັງໝົດ 492 ທ່ານ ຍິງ 150 ທ່ານ ກວມເອົາ 30,48% ຂອງຈຳນວນສະມາຊິກສະພາປະຊາຊົນແຂວງທັງໝົດ ແລະ ປັດຈຸບັນ, ສະພາແຫ່ງຊາດ ພວມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4.

ໃນການພົບປະດັ່ງກ່າວ, ທ່ານ ທາເກອິ ຊຸນຊຶເກະ (Takei Shunsuke), ໄດ້ສະແດງຄວາມດີໃຈທີ່ໄດ້ມີໂອກາດເຂົ້າພົບປະໃນຄັ້ງນີ້; ໄດ້ສະແດງຄວາມປິຕິຍິນດີທີ່ໄດ້ມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ, ຕີລາຄາສູງຜົນການພົວພັນຮ່ວມມື ລະຫວ່າງສອງຝ່າຍ ໃນໄລຍະຜ່ານມາ ແລະ ເນັ້ນເຖິງຄວາມສຳຄັນໃນການຈະສືບຕໍ່ຮ່ວມມື ແລະ ຊ່ວຍເຫລືອໃນຕໍ່ໜ້າ ໂດຍສະເພາະໃນການພັດທະນາຊັບພະຍາກອນມະນຸດ ແລະ ສືບຕໍ່ແລກປ່ຽນການຢ້ຽມຢາມຂອງການນຳຂັ້ນສູງຂອງສອງປະເທດ ກໍຄື ຂອງສອງສະພາແຫ່ງຊາດ ແລະ ການຮ່ວມມືໃນຂົງເຂດຕ່າງໆທີ່ເຫັນວ່າ ສອງຝ່າຍມີຄວາມສົນໃຈນຳກັນ.

ໃນຕອນທ້າຍ, ນາງ ທຸມມາລີ ວົງພະຈັນ ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ລັດຖະບານ ແລະ ປະຊາຊົນຍີ່ປຸ່ນ ທີ່ໄດ້ໃຫ້ການຊ່ວຍເຫລືອອັນລ້ຳຄ່າ ທັງໃນກອບສອງຝ່າຍ ແລະ ຫລາຍຝ່າຍ ແກ່ ສປປລາວ ໃນໄລຍະຜ່ານມາ ເຊິ່ງຍີ່ປຸ່ນຈັດຢູ່ໃນອັນດັບຕົ້ນໆຂອງປະເທດ ທີ່ໃຫ້ການຊ່ວຍເຫລືອໃນ ສປປລາວ.

# ສຳເລັດກອງປະຊຸມສະຫລຸບວຽກງານການເຄື່ອນໄຫວ ປະຈຳປີ 2022




(ສພຊ) ວັນທີ 20 ທັນວາ 2022 ຄະນະເລຂາທິການສະພາປະຊາຊົນແຂວງຫົວພັນ ໄດ້ຈັດກອງປະຊຸມສະຫລຸບວຽກງານຄະນະເລຂາທິການສະພາປະຊາຊົນແຂວງຫົວພັນ ປະຈຳປີ 2022 ແລະ ທິດທາງແຜນການປີ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ຄຳຟອງ ກົ້ວມີໄຊ ກຳມະການຄະນະປະຈຳ, ເລຂາທິການສະພາປະຊາຊົນແຂວງຫົວພັນ; ເຂົ້າຮ່ວມຂອງທ່ານ ສົມສັກ ດອນຈານິດ ຮອງປະທານສະພາປະຊາຊົນແຂວງ ຜູ້ຊີ້ນຳວຽກງານຄະນະເລຂາທິການສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ, ຜູ້ຕາງໜ້າຈາກຫ້ອງວ່າການແຂວງ, ຜູ້ຊ່ວຍວຽກສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຊຳເໜືອ ແລະ ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມທັງໝົດ.

ໃນກອງປະຊຸມ ໄດ້ຮັບຟັງການຜ່ານຮ່າງບົດສະຫລຸບວຽກງານຄະນະເລຂາທິການສະພາປະຊາຊົນແຂວງຫົວພັນ ປະຈຳປີ 2022 ແລະ ທິດທາງແຜນການປີ 2023 ຈາກທ່ານ ສຸກມີໄຊ ສີງບຸນເຮືອງ ຮອງເລຂາທິການສະພາປະຊາຊົນແຂວງ ເຊິ່ງກອງປະຊຸມໄດ້ສະຫລຸບຕີລາຄາຄືນບັນດາຜົນງານການເຄື່ອນໄຫວວຽກງານຄະນະເລຂາທິການ ປະຈຳປີ 2022 ແລະ ກຳນົດທິດທາງແຜນການ ປະຈຳປີ 2023 ຂອງຄະນະເລຂາທິການສະພາປະຊາຊົນແຂວງ. ຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນປະກອບຄຳຄິດ, ຄຳເຫັນໃສ່ຮ່າງບົດສະຫລຸບ ເພື່ອໃຫ້ມີເນື້ອໃນຄົບຖ້ວນ, ສົມບູນ ແລະ ສາມາດຈັດຕັ້ງປະຕິບັດໄດ້; ພ້ອມນີ້, ບັນດາທ່ານເຂົ້າຮ່ວມກອງປະຊຸມຍັງໄດ້ມີຄຳເຫັນເພື່ອເປັນການແລກປ່ຽນບົດຮຽນກັບບັນດາຂະແໜງ ທີ່ເປັນເສນາທິການໃຫ້ແກ່ຄະນະເລຂາທິການສະພາປະຊາຊົນແຂວງ ເປັນຕົ້ນແບບແຜນວິທີເຮັດວຽກ, ກົນໄກການປະສານງານ, ວຽກງານເລຂານຸການ, ບໍລິຫານ-ພິທີການ ແລະ ອື່ນໆ ເພື່ອເຮັດໃຫ້ວຽກງານຄະນະເລຂາທິການສະພາປະຊາຊົນແຂວງ ມີຄວາມພ້ອມຮອບດ້ານໃນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງ ໄດ້ເຄື່ອນໄຫວວຽກງານຕາມສິດ, ພາລະບົດບາດທີ່ກົດໝາຍກຳນົດໄວ້.

ຕອນທ້າຍກອງປະຊຸມ, ທ່ານ ສົມສັກ ດອນຈານິດ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານຫລາຍດ້ານ ທີ່ຄະນະເລຂາທິການ ກໍຄືບັນດາພະນັກງານ-ລັດຖະກອນຍາດມາໄດ້ໃນໄລຍະ 1 ປີຜ່ານມາ ບົນພື້ນຖານຄວາມສາມັກຄີເປັນເອກະພາບ ພ້ອມກັນເຮັດສຳເລັດໜ້າທີ່ການເມືອງຂອງຕົນ, ຄຽງຄູ່ກັບຜົນງານດັ່ງກ່າວ ທ່ານຍັງໄດ້ຮຽກຮ້ອງໃຫ້ຄະນະເລຂາທິການເອົາໃຈໃສ່ນຳພາ-ຊີ້ນຳສືບຕໍ່ສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານ-ລັດຖະກອນ ເປັນບັນຫາສຳຄັນຕົ້ນຕໍ, ປັບປຸງແກ້ໄຂບັນຫາຂໍ້ຄົງຄ້າງໃຫ້ໝົດໄປ, ບຸກບືນສູ້ຊົນໃນການຄົ້ນຄວ້າກຳແໜ້ນລະບຽບກົດໝາຍ, ຮັກສາມູນເຊື້ອຄວາມສາມັກຄີເປັນເອກະພາບພາຍໃນແໜ້ນແຟ້ນ ແລະ ພາຍນອກກວ້າງຂວາງ ພ້ອມກັນສືບຕໍ່ຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ມີຜົນສຳເລັດຫລາຍຂຶ້ນກວ່າເກົ່າໃນຕໍ່ໜ້າ.

(ນັກຂ່າວ ສພຂ ຫົວພັນ)

# ຫາລືວຽກງານໃນການກະກຽມ ແລະ ດຳເນີນກອງປະຊຸມຕ່າງໆຂອງສະພາປະຊາຊົນແຂວງ



(ສພຊ) ໃນຕອນເຊົ້າວັນທີ 13 ທັນວາ 2022 ທີ່ຫ້ອງປະຊຸມໃຫຍ່ຂອງສະພາປະຊາຊົນແຂວງຜົ້ງສາລີ ໄດ້ຈັດກອງປະຊຸມເພື່ອປຶກສາຫາລືກ່ຽວກັບບັນດາເນື້ອໃນ, ວຽກງານຮອບດ້ານໃຫ້ແກ່ການກະກຽມ ແລະ ດຳເນີນກອງປະຊຸມຄົບຄະນະ ປະຈຳປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 2, ກອງປະຊຸມຄົບຄະນະຂອງບັນດາຄະນະກຳມະການ, ກອງປະຊຸມປະຈຳປີຂອງຄະນະເລຂາທິການ ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ໂດຍການເປັນປະທານຂອງທ່ານ ທຸມເຜີງ ຈອມວິສານ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ບັນດາທ່ານຮອງປະທານຄະນະກຳມະການ, ຮອງເລຂາທິການ ແລະ ພະນັກງານວິຊາການ ພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມ.

ໃນທີ່ປະຊຸມໄດ້ຮັບຟັງທ່ານ ຄຳມາ ສຸລີວົງ ຮອງເລຂາທິການສະພາປະຊາຊົນແຂວງ ລາຍງານກ່ຽວກັບການກະກຽມກອງປະຊຸມຄົບຄະນະ ປະຈຳປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 2, ກອງປະຊຸມປະຈຳປີຂອງຄະນະເລຂາທິການ ແລະ ແຜນກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II; ຮັບຟັງທ່ານ ຄຳດາ ໄສລະພົມ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ທ່ານ ສຸວັນຟູ ລາວລີ ຮອງປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ; ທ່ານ ສົມຈິດ ລາວຈຸງ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຂຶ້ນລາຍງານກ່ຽວກັບການກະກຽມກອງປະຊຸມຄົບຄະນະ ປະຈຳປີ 2022 ຂອງບັນດາຄະນະກຳມະການສະພາປະຊາຊົນແຂວງ.

ຈາກນັ້ນ, ບັນດາທ່ານຜູ້ເຂົ້າຮ່ວມ ໄດ້ແລກປ່ຽນຄຳຄິດຄຳເຫັນ, ປຶກສາຫາລື, ເປັນເອກະພາບທາງດ້ານເນື້ອໃນ ເພື່ອເປັນການກະກຽມຄວາມພ້ອມໃນການດຳເນີນບັນດາກອງປະຊຸມດັ່ງກ່າວ ດ້ວຍຄວາມຮັບຜິດຊອບ ແລະ ຮັບປະກັນເຖິງຜົນສຳເລັດ ເພື່ອກ້າວໄປເຖິງການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ໃຫ້ໄດ້ຮັບຜົນສຳເລັດຕາມແຜນການທີ່ວາງໄວ້.

(ສຸນທອງ ວິໄລຈິດ)

# ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂອງອົງການປົກຄອງເມືອງທ່າແຂກ




(ສພຊ) ໂດຍປະຕິບັດຕາມກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປຸງ) ປີ 2016 ສະບັບເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016; ໃນວັນທີ 14 ທັນວາ 2022 ທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ພ້ອມດ້ວຍທ່ານ ນາງ ກ້ອນແກ້ວ ຫລວງໄຊມຸງຄຸນ ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ, ມີບັນດາທ່ານສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ແລະ ຄະນະທີມງານຕິດຕາມໄດ້ເຄື່ອນໄຫວຕິດຕາມ, ກວດກາ ແລະ ຊຸກຍູ້, ເກັບກຳຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ທີ່ຕິດພັນກັບສອງວາລະແຫ່ງຊາດ ກໍຄືວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ແກ້ໄຂບັນຫາຢາເສບຕິດໃຫ້ເປັນຮູບປະທຳ ແລະ ແຜນງົບປະມານ, ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຢູ່ ເມືອງທ່າແຂກ ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມເຮັດວຽກຂອງທ່ານ ແກ້ວລັນດອນ ຈັນທະປານີ ເຈົ້າເມືອງເມືອງທ່າແຂກ ພ້ອມດ້ວຍບັນດາທ່ານຄະນະປະຈຳພັກເມືອງ ແລະ ຫົວໜ້າ-ຮອງຫົວໜ້າຫ້ອງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ການເຄື່ອນໄຫວຕິດຕາມກວດກາຄັ້ງນີ້ ແມ່ນເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II; ເພື່ອເປັນຂໍ້ມູນສັງລວມ ໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II ພິຈາລະນາ; ເພື່ອຕິດຕາມກວດກາ ການເຄົາລົບ ແລະ ຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍຂອງບັນດາອົງການອຳນາດລັດຢູ່ຂັ້ນເມືອງ ພາຍໃນແຂວງ; ເພື່ອເປັນການສ້າງຄວາມເຂັ້ມແຂງ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງ 10 ຕົວເມືອງພາຍໃນແຂວງ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດຕິດຕາມກວດກາຂອງສະພາປະຊາຊົນຂັ້ນແຂວງ.

(ເອື້ອ ມະໂນສິງ)

# ສະຫລຸບການຊີ້ນຳ-ນຳພາຮອບດ້ານ ປະຈຳປີ 2022




(ສພຊ) ໃນຕອນບ່າຍຂອງວັນທີ 20 ທັນວາ 2022 ໜ່ວຍພັກຄະນະເລຂາທິການສະພາປະຊາຊົນແຂວງ (ຄລສຂ) ສາລະວັນ ໄດ້ຈັດກອງປະຊຸມສະຫລຸບການຊີ້ນຳ-ນຳພາວຽກງານຮອບດ້ານ ປະຈຳປີ 2022 ແລະ ວາງທິດທາງແຜນການ ປະຈຳປີ 2023 ຂອງຕົນ ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ ໂດຍການເປັນປະທານກອງປະຊຸມຂອງສະຫາຍ ສົມພອນ ແສງສຸລິຈັນ ຮອງເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກ ຄລສຂ ຄະນະປະຈຳ ເລຂາທິການ ສພຂ; ເຂົ້າຮ່ວມມີຮອງເລຂາໜ່ວຍພັກຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ແລະ ຮອງເລຂາໜ່ວຍພັກຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕະຫລອດຮອດບັນດາສະຫາຍສະມາຊິກພັກສົມບູນ-ສຳຮອງ ເຂົ້າຮ່ວມຄັ້ງນີ້.

ສະຫາຍ ສົມພອນ ແສງສຸລິຈັນ ໄດ້ກ່າວເປີດກອງປະຊຸມວ່າ: ການດຳເນີນຊີວິດການເມືອງ ປະຈຳປີ 2022 ໃນຄັ້ງນີ້ ແມ່ນວຽກງານໜຶ່ງສຸດທີ່ມີຄວາມໝາຍຄວາມສຳຄັນ ແລະ ຕ້ອງເຮັດເປັນປະຈຳຂອງອົງການຈັດຕັ້ງພັກ, ການຈັດຕັ້ງລັດ, ອົງການຈັດຕັ້ງມະຫາຊົນ, ຕ້ອງພ້ອມກັນຕີລາຄາ ແລະ ທົບທວນຄືນການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານໃນໄລຍະຜ່ານມາ ນັບທັງດ້ານຕັ້ງໜ້າ, ດ້ານຫຍໍ້ທໍ້ ແລະ ວາງທິດທາງແຜນການໃນຕໍ່ໜ້າ ໃຫ້ມີບາດກ້າວຫັນປ່ຽນຢ່າງຕັ້ງໜ້າ ແລະ ສືບຕໍ່ຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນສຳເລັດໃໝ່ຍິ່ງໃຫຍ່ຂຶ້ນກວ່າເກົ່າ.

ສະຫາຍຍັງໄດ້ໃຫ້ຮູ້ຕື່ມອີກວ່າ: ນີ້ເປັນຫລັກການນຳພາຂອງພັກ, ເພື່ອເປັນການກໍ່ສ້າງຊ່ວຍເຫລືອເຊິ່ງກັນແລະກັນທັງເປັນການຍົກສູງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນການນຳພາຂອງພັກ, ຄວາມຮູ້ຄວາມສາມາດຂອງພະນັກງານ ແລະ ປະສິດທິຜົນຂອງວຽກງານໃນການປະຕິບັດໜ້າວຽກງານທີ່ຂັ້ນເທິງມອບໝາຍໃຫ້ ທັງຮັບປະກັນຄວາມສາມັກຄີເປັນເອກະພາບພາຍໃນພັກ.

ຈາກນັ້ນ, ສະຫາຍ ຄົງສະໃໝ ວົງພັນ ຮອງເລຂາໜ່ວຍພັກ ຄລສຂ ໄດ້ຂຶ້ນຜ່ານຮ່າງບົດສະຫລຸບການຊີ້ນຳ-ນຳພາການດຳເນີນຊີວິດການເມືອງ ປະຈຳປີ 2022 ແລະ ວາງທິດທາງແຜນການ ປະຈຳປີ 2023 ຂອງໜ່ວຍພັກ ຄລສຂ ໂດຍລວມດ້ານການເມືອງແນວຄິດ ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນດ້ວຍຫລາຍຮູບການ ເປັນຕົ້ນແມ່ນຊຸກຍູ້ພະນັກງານ-ລັດຖະກອນ ເຂົ້າຮ່ວມເຊື່ອມຊຶມແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ກົດໝາຍ, ຮັບຟັງການເລົ່າມູນເຊື້ອວັນສຳຄັນຕ່າງໆຂອງຊາດ-ຂອງພັກ; ນອກນັ້ນ, ຍັງມີວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານເສດຖະກິດ ແລະ ການແກ້ໄຂຊີວິດການເປັນຢູ່ຂອງພະນັກງານ, ວຽກງານນຳພາດ້ານວັດທະນະທຳ-ສັງຄົມ, ວຽກງານນຳພາອົງການຈັດຕັ້ງມະຫາຊົນ, ວຽກງານປັບປຸງກໍ່ສ້າງພັກ-ພະນັກງານ, ວຽກງານການເງິນຂອງໜ່ວຍພັກ, ວຽກງານກວດກາພັກ, ແບບແຜນວິທີນຳພາ ແລະ ວຽກງານອື່ນໆ. ຈາກນັ້ນ, ບັນດາສະຫາຍສະມາຊິກພັກ ໄດ້ສຸມໃສ່ປະກອບຄຳຄິດຄຳເຫັນເຂົ້າໃສ່ຮ່າງບົດສະຫລຸບດັ່ງກ່າວ ຢ່າງເປັນຂະບວນຟົດຟື້ນ ທັງນີ້ເພື່ອແນໃສ່ເຮັດໃຫ້ເນື້ອໃນມີຄວາມຖືກຕ້ອງ, ຄົບຖ້ວນ ທັງແທດເໝາະກັບໜ້າທີ່ວຽກງານການເມືອງຂອງພັກໃຫ້ດີຂຶ້ນເທື່ອລະກ້າວ.

(ດີລຳພົນ ພົມມະຈັນ)

# ສຳເລັດການໃຫ້ຄຳປຶກສາດ້ານກົດໝາຍໃຫ້ແກ່ປະຊາຊົນ 93,10%



ໃນວາລະເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທ່ານ ຈອມສີ ລັດຕະນະປັນ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ທັງເປັນປະທານສະພາປະຊາຊົນແຂວງບໍ່ແກ້ວ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນ ເຊິ່ງທ່ານໄດ້ສະແດງຄວາມດີໃຈ ແລະ ພູມໃຈເປັນຢ່າງຍິ່ງ ເນື່ອງຈາກເຫັນວ່າການສຳພາດແມ່ນຊ່ອງທາງໜຶ່ງທີ່ຈະເຮັດໃຫ້ສັງຄົມຮັບຮູ້ເຖິງພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສສຊ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ໃນການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ທີ່ໄດ້ຈັດຕັ້ງ ແລະ ເຄື່ອນໄຫວວຽກງານຜ່ານມາ.

ທ່ານ ຈອມສີ ລັດຕະນະປັນ ໃຫ້ຮູ້ວ່າ: ແຕ່ກອງປະຊຸມສະໄໝສາມັນເທື່ອທີ 3 ຫາເທື່ອທີ 4 ຄະນະ ສສຊ ປະຈຳເຂດເລືອກຕັ້ງ ກໍຄືສະພາປະຊາຊົນແຂວງບໍ່ແກ້ວ ສາມາດຍາດໄດ້ຜົນງານທີ່ພົ້ນເດັ່ນຫລາຍດ້ານ, ພື້ນຖານແມ່ນການປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນແຂວງ ຄື:

**ດ້ານນິຕິກຳ:** ສາມາດພິຈາລະນາ, ຮັບຮອງເອົານິຕິກຳຂອງສະພາປະຊາຊົນແຂວງ ອອກເປັນມະຕິຂອງຄະນະປະຈຳ ໄດ້ທັງໝົດ 9 ສະບັບ. ນອກຈາກນີ້, ຍັງໄດ້ເຂົ້າຮ່ວມກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍ ໄດ້ 22 ສະບັບທີ່ສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງຈັດຂຶ້ນ (ສ້າງໃໝ່ 4, ປັບປຸງ 9) ຄື: ປັບປຸງ ເຊັ່ນ ທະນາຍຄວາມ, ທະບຽນສານ, ກວດກາລັດ, ວິທະຍາສາດ-ເຕັກໂນໂລຊີ, ການສະກັດກັ້ນ ແລະ ຄວບຄຸມພະຍາດຕິດຕໍ່, ການກວດສອບແຫ່ງລັດ, ອົງການໄອຍະການທະຫານ, ທຸລະກຳທາງເອເລັກໂຕຣນິກ, ວິສາຫະກິດ; ສ້າງໃໝ່ ເຊັ່ນ ຫໍພິພິດທະພັນ, ກົດໝາຍທາງນ້ຳ, ໜັງສືຜ່ານແດນ, ກົດໝາຍປົກຄອງ.

**ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ:** ໄດ້ພິຈາລະນາ ແລະ ປະກອບຄຳເຫັນຕໍ່ແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ກ້າວໄປເຖິງການຮັບຮອງດ້ວຍການອອກມະຕິແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ແຜນການເຄື່ອນໄຫວວຽກງານຂອງອົງການໄອຍະການ, ສານປະຊາຊົນແຂວງ, ອົງການກວດກາລັດແຂວງ ປະຈຳໄລຍະ 6 ເດືອນທ້າຍປີ ໄດ້ທັງໝົດ 13 ສະບັບ ເພື່ອເປັນບ່ອນອີງໃຫ້ແກ່ອົງການປົກຄອງທ້ອງຖິ່ນນຳໄປຈັດຕັ້ງປະຕິບັດ.

**ດ້ານການຕິດຕາມກວດກາ:** ເອົາໃຈໃສ່ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ໃນການຕິດຕາມກວດກາຢ່າງເປັນປົກກະຕິ ຕິດພັນກັບການປະສານສົມທົບກັບຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນແຂວງ, ກົງຈັກຂອງສະພາປະຊາຊົນແຂວງ ແລະ ກົງຈັກທີ່ຄະນະປະຈຳສະພາປະຊາຊົນແຂວງສ້າງຕັ້ງ ໄດ້ຕິດຕາມກວດກາໂດຍຜ່ານການລາຍງານ, ຜ່ານການດຳເນີນກອງປະຊຸມປະຈຳເດືອນ, ກອງປະຊຸມສະໄໝສາມັນ, ກອງປະຊຸມຮ່ວມ ລະຫວ່າງຄະນະ ສສຊ ປະຈຳເຂດເລືອກຕັ້ງ ກັບຄະນະປະຈຳສະພາປະຊາຊົນແຂວງແຕ່ລະເດືອນ, ກອງປະຊຸມຮ່ວມລະຫວ່າງຄະນະກຳມະການຂອງສະພາປະຊາຊົນແຂວງ ກັບບັນດາພະແນກການຂັ້ນແຂວງ ຜ່ານການລົງຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II (ຢູ່ອ້ອມຂ້າງແຂວງ, ອ້ອມຂ້າງເມືອງ ແລະ ບັນດາບ້ານ ໄດ້ທັງໝົດ 36 ຈຸດ, ມີຜູ້ເຂົ້າຮ່ວມທັງໝົດ 2.999 ຄົນ ຍິງ 1.277 ຄົນ, ລົງຕິດຕາມກວດກາຕົວຈິງຕາມແຜນການຂອງຄະນະປະຈຳກ່ຽວກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳຂອງປະຊາຊົນ ເພື່ອແກ້ໄຂບັນຫາແຮງງານ ຢູ່ເຂດເສດຖະກິດພິເສດສາມຫລ່ຽມຄຳ ແຂວງບໍ່ແກ້ວ ແລະ ໄດ້ເຂົ້າຮ່ວມເຄື່ອນໄຫວເຮັດວຽກ ແລະ ຕິດຕາມກວດກາຮ່ວມກັບທີມງານທີ່ມາຈາກສູນກາງ ຈຳນວນຫລາຍຄັ້ງ. ພ້ອມກັນນັ້ນ, ກໍໄດ້ຕ້ອນຮັບ ແລະ ໃຫ້ຄຳປຶກສາດ້ານກົດໝາຍໃຫ້ແກ່ປະຊາຊົນບັນດາເຜົ່າ ໄດ້ 29 ເລື່ອງ ເຊິ່ງຄະນະປະຈຳ, ຄະນະກຳມະການສະພາປະຊາຊົນແຂວງໄດ້ຄົ້ນຄວ້າ, ມີຄຳເຫັນ ແລະ ນຳສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂມີທັງໝົດ 27 ເລື່ອງ ເທົ່າກັບ 93,10%, ຍັງຄ້າງ 2 ເລື່ອງ ເທົ່າກັບ 6,89%.

ທ່ານໃຫ້ຮູ້ອີກວ່າ: ຜ່ານການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ຕິດຕາມກວດກາ ເຫັນວ່າບັນຫາທີ່ປະຊາຊົນສະເໜີຫລາຍ ແລະ ຍັງເປັນບັນຫາທີ່ຄົງຄ້າງ ທີ່ຍັງບໍ່ທັນແກ້ໄຂໄດ້ ພື້ນຖານແມ່ນບັນຫາກ່ຽວກັບການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນແມ່ນສະພາບເສັ້ນທາງລະຫວ່າງແຂວງຫາເມືອງ, ເມືອງຫາບ້ານ, ບ້ານຫາບ້ານຍັງເປັນທາງດິນແດງ (ບາງບ້ານຍັງບໍ່ມີເສັ້ນທາງລົດ) ບັນຫາຄ່າຄອງຊີບສູງຂຶ້ນຕາມການເພີ່ມຂຶ້ນຂອງອັດຕາເງິນເຟີ້, ລາຄານ້ຳມັນ, ບັນຫາການສ້າງວຽກເຮັດງານທຳໃຫ້ລູກຫລານທີ່ຮຽນຈົບແລ້ວບໍ່ມີບ່ອນເຮັດວຽກທີ່ຖາວອນ, ບາງບ່ອນຂາດເຂີນຄູສອນ, ຂາດເຂີນອຸປະກອນການຮຽນ-ການສອນ, ການແກ້ໄຂປາກົດການຫຍໍ້ທໍ້ທາງສັງຄົມ ໂດຍສະເພາະບັນຫາຢາເສບຕິດທີ່ເປັນເຫດຕົ້ນຕໍໃຫ້ເກີດມີບັນຫາຂີ້ລັກງັດແງະ, ການສ້າງຄວາມເດືອດຮ້ອນໃນຄອບຄົວ, ສັງຄົມ ແລະ ອື່ນໆ.

ສຳລັບມາດຕະການ ຫລື ຄາດໝາຍສູ້ຊົນໃນຕໍ່ໜ້າ ທ່ານ ຈອມສີ ລັດຕະນະປັນ ໄດ້ໃຫ້ສຳພາດວ່າ: ຄະນະ ສສຊ ປະຈຳເຂດເລືອກຕັ້ງ ກໍຄື ສສຂ ບໍ່ແກ້ວ ຈະຕ້ອງໄດ້ເອົາໃຈໃສ່ໃນການປະສານສົມທົບ ກັບອົງການປົກຄອງແຂວງ ກໍຄືພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ຕິດຕາມ, ກວດກາ ເປັນການກະຕຸກຊຸກຍູ້ການຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ສືບຕໍ່ແຜນຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດໃຫ້ມີຄວາມຄືບໜ້າ ໂດຍເລີ່ມຈາກຂັ້ນບ້ານຂຶ້ນມາຕາມ 3 ບາດກ້າວ ຕິດພັນກັບການຫັນລົງຈັດຕັ້ງເຜີຍແຜ່ບັນດານິຕິກຳຕ່າງໆຢູ່ຂັ້ນຮາກຖານດ້ວຍຫລາຍຮູບຫລາຍວິທີ, ປັບປຸງກົນໄກປະສານງານ, ຂັ້ນຕອນການໄກ່ເກ່ຍບັນຫາຕ່າງໆຢ່າງເປັນລະບົບ, ສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ ໃຫ້ເປັນຮູບປະທຳ ໃນນັ້ນ, ສືບຕໍ່ຈັດຕັ້ງປະຕິບັດຕາມກົນໄກປະສານງານລະຫວ່າງສະພາປະຊາຊົນແຂວງກັບຂະແໜງການທີ່ໄດ້ລົງລາຍເຊັນນຳກັນ.

ເປັນເຈົ້າການໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຕິດຕາມກວດກາຂອງ ສສຊ, ສສຂ ໃຫ້ເຂັ້ມງວດເປັນປົກກະຕິ, ຕິດພັນກັບການຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂຜົນຂອງການກວດກາໃຫ້ສຳເລັດໃນແຕ່ລະບັນຫາ. ພ້ອມນັ້ນ, ໃນຕໍ່ໜ້າຄະນະ ສສຊ ປະຈຳເຂດເລືອກຕັ້ງ ກໍຄືສະພາປະຊາຊົນແຂວງວາງຄາດໝາຍສູ້ຊົນ ດັ່ງນີ້: ເອົາໃຈໃສ່ການຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາບັນຫາທີ່ສຳຄັນພື້ນຖານຂອງຊາດ ແລະ ທ້ອງຖິ່ນໃຫ້ມີເນື້ອໃນທີ່ຮັດກຸມ, ຄົບຖ້ວນ, ຈະແຈ້ງ ແລະ ຕິດແທດກັບສະພາບຕົວຈິງ; ເພີ່ມທະວີການລົງໂຄສະນາເຜີຍແຜ່ກົດໝາຍ, ບັນດານິຕິກຳຕ່າງໆ ພ້ອມເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX, ສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II ທີ່ໄດ້ຮັບຮອງເອົາ ເພື່ອໃຫ້ຮອດປະຊາຊົນດ້ວຍຫລາຍຮູບ, ຫລາຍວິທີ, ສ້າງຄວາມຮັບຮູ້ເຂົ້າໃຈໃຫ້ແກ່ຜູ້ມີສິດປ່ອນບັດເລືອກຕັ້ງຢ່າງກ້ວາງຂວາງ ແລະ ທົ່ວເຖິງ; ປະຕິບັດກົນໄກປະສານງານລະຫວ່າງຄະນະ ສສຊ ປະຈຳເຂດເລືອກຕັ້ງ, ຄະນະປະຈຳສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງໃຫ້ເປັນລະບົບຕໍ່ເນື່ອງ ໂດຍຖືເອົາການດຳເນີນກອງປະຊຸມຮ່ວມ ເພື່ອປຶກສາຫາລືໃນການແກ້ໄຂວຽກງານຕ່າງໆຢ່າງເປັນປະຈຳ.



ພາບປະກອບ

# ຕິດຕາມ, ກວດກາ ແລະ ຊຸກຍູ້ ຢູ່ໂຮງຮຽນເຕັກນິກ-ວິຊາຊີບແບບປະສົມ

(ສພຊ) ໃນວັນພະຫັດທີ 15 ທັນວາ 2022 ຢູ່ທີ່ໂຮງຮຽນເຕັກນິກ-ວິຊາຊີບແບບປະສົມແຂວງອຸດົມໄຊ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງອຸດົມໄຊ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ ຢູ່ທີ່ໂຮງຮຽນເຕັກນິກ-ວິຊາຊີບແບບປະສົມແຂວງອຸດົມໄຊ ນຳໂດຍທ່ານ ດຣ. ນາງ ສິດທິວອນ ທົງສາຄອນ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ ເຊິ່ງຕ້ອນຮັບໂດຍທ່ານ ເພັດພະລັງ ປັນຍາວົງ ອຳນວຍການໂຮງຮຽນເຕັກນິກ-ວິຊາຊີບແບບປະສົມແຂວງອຸດົມໄຊ, ມີຄະນະທີມງານຈາກສະພາປະຊາຊົນແຂວງ ແລະ ຄູອາຈານພາຍໃນໂຮງຮຽນດັ່ງກ່າວເຂົ້າຮ່ວມ.

ການເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ຄັ້ງນີ້, ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງໂຮງຮຽນເຕັກນິກ-ວິຊາຊີບແບບປະສົມແຂວງອຸດົມໄຊ ໃນໄລຍະຜ່ານມາ ແລະ ລາຍງານຕາມຄຳຖາມເຈາະຈີ້ມຂອງສະພາປະຊາຊົນແຂວງ. ຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມໄດ້ປະກອບຄຳຄິດເຫັນຢ່າງກົງໄປກົງມາ ເພື່ອຊອກເຫັນດ້ານດີ-ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ຊອກຫາວິທີແກ້ໄຂໃນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ.



ການເຄື່ອນໄຫວຄັ້ງນີ້ແມ່ນເພື່ອຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂອງພາກສ່ວນກ່ຽວຂ້ອງ, ປະຕິບັດຕາມແຜນການເຄື່ອນໄຫວຂອງຄະນະກຳມະການ ແລະ ເພື່ອເປັນການເກັບກຳຂໍ້ມູນໃຫ້ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໃນການກະກຽມບັນດາເນື້ອໃນ ແລະ ດຳເນີນກອງປະຊຸມຄົບຄະນະປະຈຳປີ 2022.

(ແສງພອນ ອິນນະລົງ)

# ເລຂາໜ່ວຍພັກ ເນັ້ນໜັກຄວາມເຂົ້າໃຈຕໍ່ນະໂຍບາຍຂອງພັກໃນແຕ່ລະໄລຍະ



(ສພຊ) ດ້ວຍຄວາມເອົາໃຈໃສ່ໃນການກໍ່ສ້າງສະມາຊິກພັກ ຕາມແຜນກໍ່ສ້າງພັກ 5 ຫລັກການ, 3 ທິດນຳຂອງພັກຢ່າງໜັກແໜ້ນ ແລະ ຖືເອົາການຕຳນິສິ່ງຂ່າວ, ກໍ່ສ້າງເຊິ່ງກັນແລະກັນ ເຮັດໃຫ້ສະມາຊິກ ແລະ ໜ່ວຍພັກມີຄວາມເຂັ້ມແຂງ; ໜ່ວຍພັກສະພາປະຊາຊົນແຂວງໄຊຍະບູລີ ໄດ້ຕິດຕາມກໍ່ສ້າງມະຫາຊົນກ້າວໜ້າ 2 ສະຫາຍ ແລະ ໄດ້ຖືກສະເໜີຂຶ້ນເທິງພິຈາລະນາຂະຫຍາຍເຂົ້າພັກ ຕາມຂັ້ນຕອນ ແລະ ລະບຽບການ.

ໃນພິທີຮັບສະມາຊິກພັກສຳຮອງໃໝ່ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ເມື່ອວັນທີ 22 ທັນວາ 2022 ສະຫາຍ ນາງ ວິລະພອນ ທອງພິມ ກຳມະການພັກແຂວງ, ເລຂາໜ່ວຍພັກ, ຮອງປະທານສະພາປະຊາຊົນແຂວງໄຊຍະບູລີ ໄດ້ມີຄຳເຫັນໂອ້ລົມຕໍ່ພິທີດັ່ງກ່າວ ໂດຍສະຫາຍໄດ້ຮຽກຮ້ອງໃຫ້ບັນດາສະຫາຍສະມາຊິກພັກສຳຮອງໃໝ່ ໃຫ້ມີຄວາມຮັບຮູ້ເຂົ້າໃຈຕໍ່ກັບແນວທາງນະໂຍບາຍຂອງພັກໃນແຕ່ລະໄລຍະ ແລະ ພ້ອມກັນເອົາໃຈໃສ່ປະຕິບັດໜ້າທີ່ທີ່ໄດ້ຮັບການມອບໝາຍ, ເອົາໃຈໃສ່ປະຕິບັດກົດລະບຽບຂອງພັກໃຫ້ເຂັ້ມງວດເພື່ອພ້ອມກັນສ້າງໜ່ວຍພັກຂອງຕົນໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນເທື່ອລະກ້າວ.

(ອິນທີ ຂຽວສີຟ້າ)




# ປົງ



ຜູ້ຂຽນເຂົ້າໃຈວ່າ: ຖ້າຄົນເຮົາຫາກບໍ່ຫລົງໂຕເອງ ຫລື ຖືໂຕເອງເໜືອກວ່າຄົນອື່ນ ວ່າອັນໃດຕົນເອງຖືກໝົດ ສ່ວນຄົນອື່ນຜິດ ຄົນຜູ້ນັ້ນກໍຈະມີຄວາມສຸກໃນການດຳເນີນຊີວິດ ເພາະຈິດໃຈ ແລະ ແນວຄິດຮູ້ຈັກຍອມຮັບຄວາມເປັນຈິງ ແລ້ວເປີດໃຈກວ້າງຮັບຟັງຄຳຄິດຄຳເຫັນແຕກຕ່າງເຊິ່ງກົງກັນຂ້າມກັບບາງຄົນ ທີ່ຫລົງຍຶດຖືໂຕຕົນເປັນໃຫຍ່ ຫລື ຖ້າເວົ້າພາສາຊາວບ້ານກໍແມ່ນເມົາຍົດ, ເມົາໜ້າທີ່ຕຳແໜ່ງ ຫລົງລືມໂຕເອງ ວ່າທຸກຄົນຍ່ອມມີຜິດ-ຖືກ, ຊົ່ວ-ດີເປັນຂອງຄູ່ກັນ.

ຄຳວ່າປົງ ຫລື ປ່ອຍວາງ ຈຶ່ງເປັນຄຳກາງໆທາງພຸດທະສາສະໜາ ເນັ້ນສອນໃຫ້ຄົນລາວຊາວພຸດຮູ້ຈັກໃຊ້ສະຕິພິຈາລະນາ ວ່າບັນຫາທີ່ເກີດຂຶ້ນມັນຢູ່ເໜືອຂອບເຂດຄວາມຮັບຜິດຊອບຂອງຕົນ ຫລື ຖ້າວ່າມີເລື່ອງໃດທີ່ມັນເກີດຂຶ້ນແລ້ວຕ້ອງໄດ້ທຳໃຈ-ປົງຄວາມຄິດ, ປົງວາງຄວາມຍຶດໝັ້ນໃນລາບຍົດສັນລະເສີນທີ່ເປັນຂອງຊົ່ວຄາວ ຫລື ສຸກ ແລະ ທຸກ ທີ່ຜ່ານມາເຂົ້າໃນຊີວິດ, ຄຳວ່າປົງໃຊ້ໄດ້ຫລາຍແບບເຊັ່ນ: ປົງຄືວາງຂອງໜັກລົງ, ອັນໃດເປັນຂອງໜັກມັນຄືບັນຫາ ຫລື ວັດຖຸສິ່ງຂອງເຊັ່ນ: ເວລາໄປງານຊາປະນະກິດສົບ ເຮົາກໍເວົ້າວ່າໄປປົງສົບ ເພາະວ່າສົບຄົນຕາຍເປັນຂອງໜັກ-ເປັນຂອງເນົ່າເປື່ອຍ ຂະນະດຽວກັນເຮົາຍັງຕ້ອງພິຈາລະນາປົງສັງຂານທີ່ມັນບໍ່ທ່ຽງ, ທີເກີດແກ່ເຈັບຕາຍ.

ຄຳວ່າປົງ ຖ້າໃຊ້ກັບການແກ້ໄຂບັນຫາຊີວິດ ຍ່ອມຕ້ອງຮູ້ວ່າອັນໃດຄວນປົງປ່ອຍວາງ ແລ້ວຈະສະບາຍໃຈ, ຜູ້ຂຽນສັງເກດເຫັນວ່າ: ມານຍາຂອງໂລກ ເຮັດໃຫ້ຄົນຫລົງເຂົ້າໃຈຜິດ ວ່າຕອນໂຕເອງມີຄວາມສຸກ, ສະເຫວີຍສຸກແລ້ວຈະບໍ່ຕາຍ, ບໍ່ເຈັບ, ບໍ່

**ໂດຍ: ດັ້ນກີບເມກ**

ສູນເສຍ ເຊິ່ງແທ້ຈິງແລ້ວທຸກສະພາບສຸກ ຫລື ທຸກທີ່ເກີດຂຶ້ນໃນຊີວິດ ມັນມີເວລາຂອງມັນ, ໂລກນີ້ມີສຸກ-ມີທຸກ, ມີລາບຍົດສັນລະເສີນ ກໍມີເສື່ອມຍົດ ແລະ ນິນທາ.

ແຕ່ທຳມະຊາດຂອງຄົນ ມັກຍຶດຕິດເວລາຕົນເອງຢູ່ສະພາບມີຄວາມສຸກ ມີລາບຍົດ ຈົນຫລົງຄິດໄປວ່າ ຊິບໍ່ມີມື້ເສື່ອມສູນ.

ຄຳວ່າປົງ ຖ້າຄົນໃດມີສະຕິປັນຍາຮູ້ເທົ່າທັນ ກໍຈະບໍ່ເຮັດໃຫ້ຊີວິດຈົມທຸກ ແຕ່ຖ້າຄົນໃດຫາກບໍ່ຮູ້ວາງໃຈ-ປົງບໍ່ລົງ ຫລື ຫລົງຍຶດຕິດ ຈິດໃຈກໍຈະຜູກພັນກ່ຽວຂ້ອງ ເບິ່ງຄືວ່າຈິດໃຈບໍ່ມີຍາມອີ່ມ ເຊິ່ງບໍ່ຕ່າງກັບພວກຜີປີສາດ ທີ່ຫິວຕະຫລອດເວລາ.

## ກອງປະຊຸມ...

ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ທ່ານ ນາງ ທຸມມາລີ ວົງພະຈັນ ປະທານຄະນະສະມາຊິກສະພາແຫ່ງຊາດເພດຍິງ, ທ່ານ ນາງ ວັນດີ ບຸດທະສະວົງ ຮອງປະທານຄະນະສະມາຊິກສະພາແຫ່ງຊາດເພດຍິງ ພ້ອມດ້ວຍຜູ້ແທນຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການແຕ່ງຕັ້ງຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX ໂດຍທ່ານ ນາງ ວັນດີ ບຸດທະສະວົງ ແລະ ຮັບຟັງການລາຍງານໂດຍຫຍໍ້ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX ໃນ 3 ເດືອນຜ່ານມາ; ຜ່ານຮ່າງທິດທາງ ແລະ ວຽກງານຈຸດສຸມ ຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX.

ໂອກາດດັ່ງກ່າວ, ທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ມີຄຳເຫັນກ່າວປິດກອງປະຊຸມວ່າ: ກອງປະຊຸມຄັ້ງນີ້ໄດ້ປຶກສາຫາລື ແລະ ຕົກລົງເປັນເອກະພາບກັນຕໍ່ບັນດາເນື້ອໃນທີ່ນຳສະເໜີໃນກອງປະຊຸມຄັ້ງນີ້ ເຊິ່ງເປັນທິດທາງໃຫ້ຄະນະສະມາຊິກສະພາແຫ່ງຊາດເພດຍິງ ແລະ ບັນດາທ່ານ ສະມາຊິກສະພາແຫ່ງຊາດເພດຍິງ ຕ້ອງໄດ້ສືບຕໍ່ນຳໄປຜັນຂະຫຍາຍເປັນແຜນວຽກລະອຽດຂອງຕົນ ແລະ ນຳພາຈັດຕັ້ງປະຕິບັດໃຫ້ມີໝາກຜົນຕົວຈິງເພື່ອໃຫ້ບັນລຸຕາມແຜນວຽກຈຸດສຸມທີ່ໄດ້ພ້ອມກັນຮັບຮອງເອົາໃນກອງປະຊຸມຄັ້ງນີ້ ຢ່າງມີຄຸນນະພາບຂອບເຂດຄວາມຮັບຜິດຊອບຂອງຕົນ. ຜົນສຳເລັດຂອງກອງປະຊຸມຄັ້ງປະຖົມມະລຶກຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX ນີ້ ແມ່ນໝາກຜົນລວມຍອດຈາກຄວາມຮັບຜິດຊອບສູງຂອງບັນດາທ່ານສະມາຊິກສະພາແຫ່ງຊາດເພດຍິງ ເຊິ່ງຜູ້ເຂົ້າຮ່ວມໄດ້ມີຄວາມຮັບຜິດຊອບສູງໃນການຄົ້ນຄວ້າ ແລະ ປະກອບຄຳເຫັນທີ່ເປັນປະໂຫຍດອັນລ້ຳຄ່າ ເຮັດໃຫ້ກອງປະຊຸມຄັ້ງນີ້ ສຳເລັດຜົນຢ່າງຈົບງາມຕາມລະດັບຄາດໝາຍທີ່ວາງໄວ້ທຸກປະການ.

(ອານຸສອນ ພູມມີທອນ)

## ສາລາກະວີ

# ປີໃໝ່ເຕືອນສະຕິ

**# ໂດຍ: ອຳມະຕະ ທິດສະຣາຊ**

❈ ເຂັມໂມງເລີຍລ່ວງຍ້າຍ
ໝູນໄປຕາມເວລາ
ຈາກວັນເປັນຫລາຍມື້
ສັງຂານຫຍັບຍ່າງຍ້າຍ

ມິເຄີຍນັ່ງລໍໃຜ
ກົດເກນການຕັ້ງ
ເດືອນ-ປີ-ສະຕະວັດ
ຫລາຍຂຶ້ນນັບວັນ

❈ ບາງຄົນນັ້ນຈົ່ມເວົ້າ
ສັງວ່າໄວວາໝູນ
ຍັງບໍ່ທັນກະທຳສ້າງ
ອີກດຽວພຽງຮັບຮູ້

ວັນແຫ່ງເວລາ
ຜ່ານໄປປານນ້ຳ
ຜົນງານດີເດັ່ນ
ເວລາລ້ຳລ່ວງໄປ

❈ ປີໃໝ່ຫຍັບມໍ່ເຂົ້າ
ໝູນວຽນວົນໄປມາ
ບອກເຮົາມີສະຕິຮູ້
ຢ່າພຽງປະປ່ອຍລ້າ

ແທນທີ່ປີເດີມ
ປ່ຽນແປງເລີ່ງເລື້ອຍ
ວັນຄືນເດີນຜ່ານ
ເມົາຫລິ້ນຢ່າງດຽວ

❈ ອັນໜຶ່ງປີໃໝ່ນີ້
ໜຶ່ງປີເລີຍກາຍເຮົາ
ອັນໃດຍັງຄົງຄ້າງ
ຂໍ້ດີເຕີມແຕ່ງສ້າງ

ເຕືອນບອກຜົນງານ
ເຮັດຫຍັງມາໄດ້
ແຜນການຕັ້ງຕໍ່
ອັບປີນັ້ນຫລີກໄກ

❈ 2023 ແປປ່ຽນໃຫ້
ຢ່າໄດ້ມົວເມົາສະຫລອງ
ຂໍຈົ່ງເອົາຕົວຕັ້ງ
ມີສະຕິປີໃໝ່ນີ້

ແຍງແວ່ນດູຕົວເອງ
ເຮີ່ນຳເບຍເຫລົ້າ
ການງານທຸ່ນທ່ຽງ
ຕົວເຈົ້າຊິປອດໄພ

❈ ປີໃໝ່ໃຫ້ສະຕິຕໍ່ຕັ້ງ
ໄຝ່ດຳເນີນກຸສົນດີ
ເດີນຕາມທາງຄວາມຖືກຕ້ອງ
ເປັນກຳລັງສືບສ້າງ

ເຍືອງຮຸ່ງດູຕົນ
ໃສ່ໃຈກະທຳສ້າງ
ນຳຊີວິດີເດັ່ນ
ເມືອງບ້ານຮຸ່ງວິໄລ ທ່ານເອີຍ!



## ທັກທາຍ ລະບາຍ

**# ສາວຈົ້ມ**

### (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

❈ **ງານ**ບຸນປະເພນີ ຂອງພີ່ນ້ອງປະຊາຊົນຫລາຍເຜົ່າ ພວມດຳເນີນໄປຢ່າງຄຶກຄື້ນ ເພື່ອເປັນການ**ສົ່ງທ້າຍປີເກົ່າ ຕ້ອນຮັບປີໃໝ່** ປີເກົ່າຫຍັບຍ່າງຍ້າຍ ປີໃໝ່ວຽນມາ ຂໍອວຍພອນ ປະຊາ ທົ່ວທາບີແຖວນ ໃຫ້ຮັ່ງມີລອຍລົ້ນ ກາຍໃຈສຸຂະພາບ ໂຊກລາບໄຫລຫລັ່ງເຂົ້າ ການກ້າວຮຸ່ງຈະເລີນ **ພີ່ນ້ອງເອີຍ!**

❈ **ຊຽງ**ຂວາງເກມ **ເປີດ ແລະ ປິດ**ໃນໄລຍະ **13-22 ທັນວາຜ່ານມາ** ຕາມແຜນການໃນຕໍ່ໜ້າ ມະຫະກຳກິລາແຫ່ງຊາດ **ຄັ້ງທີ XII ປີ 2025** ແມ່ນວ່າ**ນະຄອນຫລວງວຽງຈັນເປັນເຈົ້າພາບ** ໂດຍຄາດວ່າ ຈະເລືອກເອົາ**ປະຕູໄຊເປັນສັນຍາລັກ** ເນື່ອງຈາກວ່າປະຕູໄຊ**ໝາຍເຖິງໄຊຊະນະ** ແລະ ການແຂ່ງຂັນກິລາແຕ່ລະປະເພດ ຕ້ອງມີໄຊຊະນະ ສ່ວນວ່າການເລືອກເອົາ**ນົກຍູງ ເປັນສັດນຳໂຊກ**ນັ້ນ ເນື່ອງຈາກເປັນສັດທີ່ສວຍງາມ ແລະ ໃກ້ສູນພັນ. ພ້ອມນັ້ນ ຍັງໄດ້ກະກຽມການສະແດງຕ່າງໆ ເຊັ່ນ ບົດຟ້ອນ-ບົດເພງ **"ຍິນດີຕ້ອນຮັບສູ່ນະຄອນຫລວງເກມ"** ກະກຽມໃຈພີ່ນ້ອງ ເປັນເຈົ້າພາບງານສຳຄັນ ພັດທະນາຕົນເອງ ເສດຖະກິດໄປພ້ອມ ເພື່ອນະຄອນຫລວງໄດ້ ກາຍເປັນເຈົ້າພາບທີ່ ດີ ສົມບູນພຽບພ້ອມ ສົມເອີ້ນວ່ານະຄອນ **ນັ້ນແລ້ວ!**

❈ **ໜັງສືພິມ "ຜູ້ແທນປະຊາຊົນ"** ໄດ້ຈັດທຳ**ສະບັບພິເສດ** ໃນວັນທີ **22 ທັນວາ 2022** ໂດຍການສັງລວມເອົາຄຳເຫັນຂອງ ສສຊ ແລະການຊີ້ແຈງບັນຫາຕ່າງໆ ຂອງພາກສ່ວນທີ່ກ່ຽວຂ້ອງ ໃນກອງປະຊຸມສະໄໝສາມັນ**ເທື່ອທີ 4** ສະພາແຫ່ງຊາດ **ຊຸດທີ IX** ມານຳສະເໜີ ເພື່ອໃຫ້ທ່ານຜູ້ອ່ານ ໄດ້ສຳຜັດຄວາມຮູ້ສຶກ ເໝືອນໄດ້ຢູ່ໃນບັນຍາກາດສົດຂອງກອງປະຊຸມດັ່ງກ່າວ ທຸກຄຳເວົ້າຂີດແຕ້ມ ແຊມຊອດບົດຄຳເຫັນ ເປັນການຈາກຄວາມຈິງ ຈາກໃຈທາງເບື້ອງ ທ່ານຜູ້ແທນປະຊາຊົນໄດ້ ນຳມາສະເໜີຕໍ່ ກອງປະຊຸມຄົ້ນຄວ້າ ວິທີແກ້ເພື່ອປະຊາ **ນັ້ນແລ້ວ!**

## ຊວນຍິ້ມ

# ແອ່ນຕຸ້ງ

**ເລື່ອງ: ນ້ຳຕານບໍ່ໄດ້ຈ່າຍ**

ມື້ໜຶ່ງ ທິດເຈີດ ໄປກິນກາເຟ ຫລັງຈາກກິນແລ້ວກໍເອີ້ນໃສ່ຄົນຂາຍ.

**ທິດເຈີດ** : ຄ່າກາເຟເທົ່າໃດ
**ແມ່ຄ້າ** : 5 ພັນກີບ
**ທິດເຈີດ** : ຄ່ານ້ຳຕານເດ
**ແມ່ຄ້າ** : ນ້ຳຕານບໍ່ໄດ້ຈ່າຍ
**ທິດເຈີດ** : ເອີ! ດີໆ ຄັນຊັ້ນເອົານ້ຳຕານໃສ່ຖົງໃຫ້ອ້າຍແດ່ຈັກ 5 ໂລ
**ແມ່ຄ້າ** : ???!!!



## ຄະຕິເຕືອນໃຈ

# ດອກຂະຍອມ

ຢ່າລົບລູ່ຄູບຄົບ ຢ່າຄຶຕົນເປັນໃຫຍ່

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 103 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 19 ສິງຫາ 2022

## ລັດຖະດຳລັດ
## ຂອງປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 46/ສພຊ, ລົງວັນທີ 07 ກໍລະກົດ 2022 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 04/ຄປຈ, ລົງວັນທີ 05 ສິງຫາ 2022.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

**ທອງລຸນ ສີສຸລິດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 46 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 07 / 07 / 22

**ມະຕິ**
**ຂອງກອງປະຊຸມສະພາແຫ່ງຊາດ**
**ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຄຸ້ມຄອງ**
**ອາວຸດ ແລະ ວັດຖຸລະເບີດ**

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໃນວາລະຂອງກອງປະຊຸມ ຄັ້ງວັນທີ 27 ມິຖຸນາ 2022 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນເຊົ້າຂອງວັນທີ 7 ກໍລະກົດ 2022.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 14 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 7 ກໍລະກົດ 2022

# ກົດໝາຍ
# ວ່າດ້ວຍການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະມາດຕະການ ກ່ຽວກັບການຄຸ້ມຄອງ ຕິດຕາມ ກວດກາ ວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໃນທົ່ວສັງຄົມ ເພື່ອໃຫ້ວຽກງານດັ່ງກ່າວ ປະຕິບັດໄດ້ຢ່າງຖືກຕ້ອງ, ເປັນເອກະພາບ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນໃຫ້ປະເທດຊາດ ມີສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ແມ່ນ ການຄວບຄຸມ, ຕິດຕາມ, ກວດກາ ການ ປະດິດ, ດັດ ແປງ, ຜະລິດ, ຈຳໜ່າຍ, ຈັດຊື້, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ນຳຜ່ານ, ນຳໃຊ້, ປົກປັກຮັກສາ, ທຳລາຍ ຫຼື ມີໄວ້ໃນຄອບຄອງ ອາວຸດ ແລະ ວັດຖຸລະເບີດ ເພື່ອຮັບປະກັນຄວາມສະຫງົບ ແລະ ຄວາມປອດໄພຂອງສັງຄົມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ອາວຸດ ໝາຍເຖິງ ອຸປະກອນ, ເຄື່ອງມື, ພາຫະນະ ຫຼື ລະບົບພາຫະນະ ທີ່ສ້າງຂຶ້ນ ຫຼື ນຳໃຊ້ ໃນການປ້ອງກັນ, ຕໍ່ສູ້, ທຳຮ້າຍ ຫຼື ທຳລາຍ, ຝຶກຊ້ອມ, ແຂ່ງຂັນກິລາ ເຊັ່ນ ອາວຸດເສິກ, ອາວຸດກິລາ ແລະ ອາວຸດພື້ນເມືອງ;

2. ວັດຖຸລະເບີດ ໝາຍເຖິງ ຜະລິດຕະພັນທີ່ຜະລິດຈາກ ທາດລະເບີດ, ເຄມີຜະລິດລະເບີດ, ອຸປະກອນກໍ່ລະເບີດ ຊຶ່ງກໍ່ໃຫ້ເກີດປະຕິກິລິຍາເຄມີຢ່າງວ່ອງໄວ, ແຮງດັນ, ພະລັງງານຄວາມຮ້ອນ, ອາຍແກັດ, ລັງສີ, ຄື້ນ, ແສງ ທີ່ເຮັດໃຫ້ເກີດສຽງລະເບີດ ເປັນຕົ້ນ ລູກລະເບີດ ແລະ ດອກໄມ້ໄຟ;

3. ທາດລະເບີດ ໝາຍເຖິງ ທາດເຄມີດ່ຽວ ຫຼື ທາດເຄມີປະສົມ ທີ່ກໍ່ໃຫ້ເກີດປະຕິກິລິຍາການລະເບີດໄດ້ດ້ວຍການກະຕຸ້ນທາງກົນລະສາດ, ຄວາມຮ້ອນ, ເຄມີ ຫຼື ໄຟຟ້າ ແລະ ອື່ນໆ;

4. ເຄມີຜະລິດລະເບີດ ໝາຍເຖິງ ເຄມີ ທີ່ຖືກນຳໃຊ້ເຂົ້າໃນການຜະລິດວັດຖຸລະເບີດ;

5. ອຸປະກອນກໍ່ລະເບີດ ໝາຍເຖິງ ເຄື່ອງຈູດລະເບີດ, ສາຍຂະນວນ, ສາຍແຕກ, ແກ໋ບ, ບໍ່ກຳເນີດໄຟ ຫຼື ສິ່ງອື່ນ ທີ່ມີຜົນກະທົບໃນການສ້າງແຮງກະຕຸ້ນເຮັດໃຫ້ລະເບີດ;

6. ດອກໄມ້ໄຟ ໝາຍເຖິງ ວັດຖຸ ທີ່ສາມາດໄໝ້ລະເບີດ ດ້ວຍການນຳເອົາໝື້ ມາຫໍ່ດ້ວຍເຈ້ຍ ຫຼື ຍັດອັດໃສ່ບັ້ງ ຫຼື ຫຸ້ມຫໍ່ດ້ວຍວັດຖຸອື່ນ ທີ່ຈູດຂະນວນດ້ວຍໄຟ ຫຼື ລະບົບໄຟຟ້າ ທີ່ກໍ່ໃຫ້ມີສຽງແຕກ ຫຼື ລະເບີດ ຫຼື ພຸ່ງລຳແສງເປັນໄຟ ມີສຽງແຕກເທິງອາກາດ ເປັນຕົ້ນ ບັ້ງໄຟ, ບັ້ງໄຟດອກ ແລະ ໝາກກະໂພກ;

7. ເຄື່ອງມືຊ່ວຍໜູນ ໝາຍເຖິງ ອຸປະກອນ ແລະ ສັດວິຊາສະເພາະ ທີ່ນຳໃຊ້ຊ່ວຍໜູນເຂົ້າໃນການປະຕິບັດໜ້າທີ່ວຽກງານວິຊາສະເພາະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຊັ່ນ ປືນໄຟຟ້າ, ອາຍແກ๊ສ, ຢາສະຫຼົບ, ຕາໜ່າງ, ລູກກະສູນຢາງ, ແກ໊ສນ້ຳຕາ, ດອກໄມ້ໄຟສັນຍານ, ລະເບີດຄວັນ, ລະເບີດນ້ຳຕາ, ຄ້ອນໄຟຟ້າ, ຄ້ອນ ຢາງ, ຄ້ອນເຫຼັກ, ກະແຈມື, ເຄື່ອງວາງຕະປູ ຫຼື ເຄື່ອງສະກັດຢາງຕີນລົດ, ເສື້ອເກາະກັນກະສູນ, ຖົງມືກັນມີດ, ໂລ່ກັນ, ໝວກກັນກະທົບ, ກັນລູກກະສູນ, ຊ້າງ, ມ້າ, ໝາ ແລະ ເຄື່ອງມືອື່ນ;

8. ກຳລັງປ້ອງກັນຕົວ ໝາຍເຖິງ ພະນັກງານ, ກຳມະກອນ, ນັກສຶກສາ ທີ່ໄດ້ຮັບການປະກອບອາວຸດ ຊຶ່ງຈັດຕັ້ງຂຶ້ນຢູ່ຕາມ ສຳນັກງານ ອົງການ, ສະຖາບັນການສຶກສາ, ໂຮງໝໍ, ໂຮງຈັກ, ໂຮງງານ ແລະ ສາງຄັງ ທີ່ເປັນຂອງລັດ ເຮັດໜ້າທີ່ປ້ອງກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ພາຍໃນຂອບເຂດທີ່ຕັ້ງຂອງຕົນ;

9. ກຳລັງປ້ອງກັນຕົວ ສຳນັກງານ ອົງການ ໝາຍເຖິງ ພະນັກງານ, ລັດຖະກອນ ທີ່ໄດ້ຮັບການແຕ່ງຕັ້ງ ໃຫ້ເຮັດໜ້າທີ່ປ້ອງກັນ ຢູ່ ສຳນັກງານ ອົງການ, ເປັນກຳລັງເຄິ່ງອາຊີບ ທີ່ຂຶ້ນກັບຂະແໜງການປ້ອງກັນຄວາມສະຫງົບ;

10. ກຳລັງປ້ອງກັນພາຍໃນ ໝາຍເຖິງ ພະນັກງານ ທີ່ໄດ້ຮັບການມອບໝາຍໃຫ້ເຮັດໜ້າທີ່ປ້ອງກັນ ຢູ່ບັນດາກະຊວງ, ສຳນັກງານ ອົງການ, ໂຮງງານ, ກິດຈະການອື່ນ ທີ່ຂຶ້ນກັບການຊີ້ນຳຂອງຄະນະນຳຢູ່ຂັ້ນນັ້ນ ແລະ ຄະນະນຳຂອງຂະແໜງການປ້ອງກັນຄວາມສະຫງົບ, ສຳລັບວຽກງານວິຊາສະເພາະນັ້ນ ແມ່ນຂຶ້ນກັບຂະແໜງການປ້ອງກັນຄວາມສະຫງົບ;

11. ກຳລັງຮັກສາຄວາມປອດໄພ ໝາຍເຖິງ ກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ, ມີເຄື່ອງແບບ ແລະ ເຄື່ອງໝາຍສະເພາະ ເຮັດໜ້າທີ່ໃນການປ້ອງກັນ, ເວນຍາມຢູ່ ສຳນັກງານ ອົງການ, ໂຮງຈັກ, ໂຮງງານ, ໂຮງໝໍ, ໂຮງຮຽນ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງສາກົນ, ສະຖານທູດ, ສະຖານກົງສຸນ, ເຮືອນພັກຂອງຄົນຕ່າງປະເທດ ແລະ ພົນລະເມືອງລາວ ຊຶ່ງໄດ້ຮັບການສ້າງຕັ້ງ, ຍຸບເລີກ ແລະຢູ່ໃນການຄຸ້ມຄອງ, ຊີ້ນຳຂອງກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ລັດ ຊຸກຍູ້ ສົ່ງເສີມ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ຢູ່ ສປປລາວ ດ້ວຍການພັດທະນາໂຄງລ່າງພື້ນຖານ ໃຫ້ເປັນລະບົບຄົບຊຸດ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນ ແລະ ເຕັກໂນໂລຊີທີ່ທັນສະໄໝ ໃຫ້ແກ່ກຳລັງປະກອບອາວຸດ.

ລັດ ເອົາໃຈໃສ່ໃນການ ໂຄສະນາ ເຜີຍແຜ່ ສ້າງຈິດສຳນຶກໃຫ້ສັງຄົມຮັບຮູ້, ເຂົ້າໃຈ ເຖິງຄຸນປະໂຫຍດ, ຄວາມເປັນອັນຕະລາຍຂອງ ອາວຸດ ແລະ ວັດຖຸລະເບີດ, ຈຳກັດ, ຫຼຸດຜ່ອນຜົນກະທົບ ຕໍ່ ຊີວິດ, ສຸຂະພາບ, ຂອງ ຄົນ, ສັດ, ພືດ, ຊັບສິນ ແລະ ສິ່ງແວດລ້ອມ.

**ມາດຕາ 5 ຫຼັກການ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດຕາມ ລັດຖະທຳມະນູນ, ກົດໝາຍ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

2. ຄຸ້ມຄອງ ຕິດຕາມ ກວດກາ ໂດຍກົງຂອງ ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ຢ່າງລວມສູນ, ເປັນເອກະພາບ ແລະ ເຂັ້ມງວດ ໃນຂອບເຂດທົ່ວປະເທດ;

3. ປະສານສົມທົບ ຢ່າງກົມກຽວລະຫວ່າງ ກຳລັງປ້ອງກັນຊາດ, ກຳລັງປ້ອງກັນຄວາມສະຫງົບ, ຂະແໜງ ການອື່ນ ແລະ ອົງການປົກຄອງທ້ອງຖິ່ນ;

4. ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ຢູ່ ສປປລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດ ຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຄົ້ນຄວ້າທາງດ້ານວິທະຍາສາດ, ການສຶກສາ, ການສ້າງ, ບຳລຸງຊັບພະຍາກອນມະນຸດ ເພື່ອພັດທະນາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໃຫ້

ອ່ານຕໍ່ສະບັບໜ້າ...




## ຕາມຫລັງດີກວ່າ

**# ໂດຍ: ປ່າວກະປື**

"ຖ້າເຮົາຈ້າງໂຕ" ເຈົ້າຂອງຮ້ານເວົ້າກັບຊາຍໜຸ່ມ, "ໂຕຊິໄດ້ຫ້າແສນກີບຕໍ່ເດືອນ, ແຕ່ຫລັງຈາກສິບເດືອນຕໍ່ໄປ ໂຕຊິໄດ້ເຈັດແສນກີບຕໍ່ເດືອນ"

"ເອີ່.. ດີ... ຄັນຊັ້ນ ຫລັງຈາກສິບເດືອນແລ້ວ ຂ້ານ້ອຍຈຶ່ງຊິກັບມາເຮັດວຽກໃຫ້".

## LATER BETTER

**# By: BAOKBU**

"If I hire you", said the shopkeeper to the youth, you'll get 500.000 kip a month to start with, and 700.000 kip in ten months".

"Well, I'll come back after ten months".

# ສະຫລຸບບັ້ນ "ການເດີນທາງທີ່ປອດໄພ"

**ແປ ແລະ ຮຽບຮຽງ: ໄຊຊະນະ**

ອີງຕາມການລາຍງານຂ່າວໃນວັນທີ 16 ທັນວາ 2022 ໃຫ້ຮູ້ວ່າ: ອົງການ UNICEF ສົມທົບກັບກະຊວງສາທາລະນະສຸກຫວຽດນາມ ແລະ ອົງການອະນາໄມໂລກ (WHO) ສະຫລຸບບັ້ນ "ການເດີນທາງທີ່ປອດໄພ".

ຕົ້ນປີ 2022, ເມື່ອເຫັນໄດ້ຄວາມສຳຄັນຂອງການສະໜອງຂໍ້ມູນຂ່າວສານໃຫ້ປະຊາຊົນ ເພື່ອພ້ອມກັນລະມັດລະວັງຕໍ່ການຜັນແປຂອງພະຍາດໂຄວິດ-19; ໃນວັນທີ 7 ມີນາ 2022 ອົງການ UNICEF, ອົງການ WHO ແລະ ກະຊວງສາທາລະນະສຸກຂອງຫວຽດນາມໄດ້ປຸກລະດົມບັ້ນ "ການເດີນທາງທີ່ປອດໄພ" ດ້ວຍຈຸດປະສົງແມ່ນເນັ້ນໜັກ ແລະ ປັບປຸງຄວາມສຳຄັນແມ່ນເລື່ອງຂອງທຸກໆຄົນ ພ້ອມກັນເຄົາລົບ, ປະຕິບັດບັນດາມາດຕະການສະກັດກັ້ນ ແລະ ຕ້ານພະຍາດໂຄວິດ-19 ລວມທັງການສັກວັກຊິນກັນພະຍາດໂຄວິດ-19 ອີກດ້ວຍ.




ພາຍຫລັງການຜັນຂະຫຍາຍມາເປັນເວລາ 9 ເດືອນ, ບັ້ນ "ການເດີນທາງທີ່ປອດໄພ" ບັນລຸໄດ້ໝາກຜົນທີ່ໜ້າປະທັບໃຈທາງສື່ມວນຊົນ ແລະ ສື່ສັງຄົມອອນລາຍ, ຕັ້ງໜ້າປະກອບສ່ວນເຂົ້າໃນວິວັດການ "ປັບຕົວຢ່າງປອດໄພ, ມີໄຫວພິບ ແລະ ຄວບຄຸມພະຍາດໂຄວິດ-19 ຢ່າງມີປະສິດທິຜົນ" ເຊິ່ງຫວຽດນາມ ພວມຜັນຂະຫຍາຍ ບັນດາສານຂອງບັ້ນປຸກລະດົມມີລັກສະນະທົ່ວໄປ ແລະ ໄດ້ຮັບການຮັບຮອງຢ່າງຕັ້ງໜ້າຈາກມະຫາຊົນ, ດ້ວຍ 60 ກວ່າລ້ານຄົນ ເຂົ້າເຖິງເນື້ອໃນ ແລະ 5 ກວ່າລ້ານຄົນ ຕິດຕໍ່ທາງ Facebook.

**ແຫລ່ງຂ່າວ: ກປ.ອອນໄລ**

# ອິນໂດເນເຊຍ "ເລັ່ງໃຊ້ ງົບຈູງໃຈ 5 ພັນຕື້ຣູເປຍ" ກະຕຸ້ນຍອດຂາຍລົດ EV

**ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ**



ອິນໂດເນເຊຍ ອາດຈັດສັນເງິນ 5 ພັນຕື້ຣູເປຍ ຈາກງົບປະມານໃນປີໜ້າ ເພື່ອຈູງໃຈການຊື້ລົດໄຟຟ້າ (Electric Vehicle-EV) ເຖິງວ່າລາຍລະອຽດຂອງແຜນຈະຢູ່ລະຫວ່າງການສະຫລຸບກໍຕາມ.

ອີງຕາມການລາຍງານຂ່າວໃນວັນທີ 22 ທັນວາ ໃຫ້ຮູ້ວ່າ: ທ່ານ ອາກຸສ ກູມີວັງ ກາຕາຊາສມິຕາ ລັດຖະມົນຕີກະຊວງອຸດສາຫະກຳອິນໂດເນເຊຍ ກ່າວໃນອາທິດຜ່ານມາວ່າ: ຜູ້ຊື້ຈະໄດ້ຮັບສ່ວນຫລຸດ 80 ລ້ານຣູເປຍ ສຳລັບລົດ EV ທີ່ຜະລິດໂດຍບໍລິສັດທີ່ມີໂຮງງານໃນປະເທດ ລວມທັງສິ່ງຈູງໃຈອື່ນໆສຳລັບລົດໄຮບຣິດ ແລະ ລົດຈັກໄຟຟ້າ ເຊິ່ງລັດຖະບານຈາກາຕາ ວາງແຜນຈະມອບເງິນສະໜັບສະໜູນໃຫ້ຜູ້ຂາຍ ເພື່ອທົດແທນຄ່າໃຊ້ຈ່າຍ.

ທ່ານ ແອລັງກາ ຮາຕາໂຕ ຫົວໜ້າລັດຖະມົນຕີເສດຖະກິດຂອງອິນໂດເນເຊຍ ກ່າວໃນການຖະແຫລງຂ່າວວັນທີ 21 ທັນວາຜ່ານມາວ່າ: ທາງການອິນໂດເນເຊຍ ກຳລັງໃຫ້ລາຍລະອຽດກ່ຽວກັບການຊອກຫາວິທີການທີ່ພວກເຂົາສາມາດເຮັດໄດ້ໂດຍອີງຕາມການຈັດສັນງົບປະມານທັງກ່າວຕື່ມວ່າ: ລັດຖະບານກຳລັງພິຈາລະນາການໃຫ້ເງິນຊ່ວຍເຫລືອການຈຳໜ່າຍລົດເມໄຟຟ້າເຊັ່ນກັນ.

ທ່ານ ໂຈໂກ ວິໂດໂດ ປະທານາທິບໍດີອິນໂດເນເຊຍ ກ່າວໃນການຖະແຫລງຂ່າວດຽວກັນວ່າ: "ພວກເຮົາຫວັງວ່າຈາກສິ່ງຈູງໃຈເຫລົ່ານີ້ ອຸດສາຫະກຳລົດຈັກໄຟຟ້າ ແລະ ລົດຍົນໄຟຟ້າຈະເຕີບໃຫຍ່".

ທັງນີ້, ທ່ານ ແອລັງກາ ຮາຕາໂຕ ກ່າວອີກວ່າ: ອິນໂດເນເຊຍ ຕັ້ງເປົ້າຍອດຂາຍລົດຍົນ EV ທັງໝົດໃນປີ 2025 ມີອັດຕາປະມານ 20%.

ບໍລິສັດທີ່ລົງທຶນ ຫລື ປະກາດແຜນການລົງທຶນໃນການຜະລິດລົດຍົນໄຟຟ້າໃນອິນໂດເນເຊຍ ໄດ້ແກ່ບໍລິສັດ ໂຕໂຢຕ້າ ມໍເຕີ, ບໍລິສັດ ມິດຊູບິຊິ ມໍເຕີ ແລະ ບໍລິສັດ ຮຸນໄດ ມໍເຕີ.

ນອກຈາກນີ້, ອິນໂດເນເຊຍ ຍັງພະຍາຍາມຊັກຊວນບໍລິສັດເທສລາໃຫ້ລົງທຶນການຜະລິດບໍ່ພຽງແຕ່ແບັດເຕີຣີລົດ EV ແຕ່ລວມທັງລົດຍົນໃນປະເທດອີກຕື່ມ.

**ແຫລ່ງຂໍ້ມູນ: REUTERS**

### ຄະນະ...

ລາວ ແລະ ລັດຖະສະພາເຢຍລະມັນ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນນຳກັນ ພ້ອມທັງແລກປ່ຽນບົດຮຽນໃນການສະໜອງຂໍ້ມູນ-ຂ່າວສານ ໂດຍຜ່ານລະບົບຫ້ອງສະໝຸດ, ກົນໄກເອເລັກໂຕຣນິກສື່ມວນຊົນ, ການບໍລິການການຄົ້ນຄວ້າວິທະຍາສາດ, ວຽກງານບໍລິການ-ບໍລິຫານ ຂອງສຳນັກງານເລຂາທິການລັດຖະສະພາ. ໃນໂອກາດດັ່ງກ່າວນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ເຂົ້າຢ້ຽມຂໍ່ານັບ ແລະ ພົບປະເຮັດວຽກກັບທ່ານ ນາງ ເປັດຕຣາ ປາວ ສະມາຊິກສະພາ, ຮອງປະທານສະພາບູນເດັດສະຕາກ, ທ່ານ ປອ. ຊານ ເຟຣກັ້ນ ຫົວຫນ້າພະແນກອາຊີໃຕ້-ອາຊີຕາເວັນອອກ ແລະ ປະຊາຄົມອາຊຽນ, ກະຊວງການຕ່າງປະເທດ ແລະ ທ່ານ ອູໂດ ພົວເບີ ຮອງຫົວຫນ້າພະແນກອາຊີຕາເວັນອອກ ແລະ ອາຊີຕາເວັນອອກສ່ຽງໃຕ້, ກະຊວງການຮ່ວມມືເສດຖະກິດ ແລະ ການພັດທະນາ ແຫ່ງ ສາທາລະນະລັດສະຫະພັນເຢຍລະມັນ ເຊິ່ງສອງຝ່າຍໄດ້ຕີລາຄາຄືນການພົວພັນຮ່ວມມືລະຫວ່າງ ສປປລາວ ແລະ ສສ.ເຢຍລະມັນ ກໍຄືລະຫວ່າງສອງອົງການນິຕິບັນຍັດ ແລະ ປຶກສາຫາລືທິດທາງແຜນການໃນຕໍ່ໜ້ານຳກັນ.

ສປປລາວ ແລະ ສສ.ເຢຍລະມັນ ໄດ້ສ້າງຕັ້ງສາຍພົວພັນການທູດນຳກັນ ໃນວັນທີ 31 ມັງກອນ 1958 ປີ 2023 ກໍຈະຄົບຮອບ 65 ປີ, ສອງປະເທດ ໄດ້ມີການພົວພັນຮ່ວມມືທີ່ດີນຳກັນຕະຫລອດມາ ເຊິ່ງສະແດງອອກມີການແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆ ນຳກັນຢ່າງເປັນປົກກະຕິ, ມີການຊ່ວຍເຫລືອ ແລະ ສະໜັບສະໜູນເຊິ່ງກັນແລະກັນ. ມາຮອດປັດຈຸບັນນີ້, ສສ.ເຢຍລະມັນ ໄດ້ໃຫ້ການຊ່ວຍເຫລືອແກ່ ສປປລາວ ຈຳນວນ 570 ກວ່າລ້ານ ເອີໂຣ ແລະ ໃນປີ 2023, ສສ. ເຢຍລະມັນ ໄດ້ປະກາດໃຫ້ການຊ່ວຍເຫລືອແກ່ລາວ ມູນຄ່າ 38 ລ້ານເອີໂຣ ໃນ 3 ຂົງເຂດຊ່ວຍເຫລືອ ຄື: ການປົກປັກຮັກສາສິ່ງແວດລ້ອມ, ປ່າໄມ້ ແລະ ຊີວະນາໆພັນ, ການພັດທະນາສຶກສາ ແລະ ສາທາລະນະສຸກໃນເຂດຊົນນະບົດ ແລະ ອາຊີວະສຶກສາ ໂດຍຖືເອົາເປົ້າໝາຍສຳຄັນທີ່ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ຂອງ ສປປລາວ.

ສະພາແຫ່ງຊາດລາວ ແລະ ລັດຖະສະພາເຢຍລະມັນ ມີການພົວພັນຮ່ວມມືນຳກັນຢ່າງເປັນປົກກະຕິ ເຊິ່ງສະແດງອອກໃນການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນນຳກັນ ຄື ໃນປີ 2014 ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານຮອງປະທານກຳມາທິການເສດຖະກິດ, ແຜນການ ແລະ ການເງິນ ໄດ້ຢ້ຽມຢາມ ແລະ ແລກປ່ຽນບົດຮຽນ ຢູ່ເຢຍລະມັນ ແລະ ທ່ານປະທານກຳທິມາທິການການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາລັດ ຂອງລັດຖະສະພາເຢຍລະມັນ ໄດ້ມາຢ້ຽມຢາມເຮັດວຽກຢູ່ລາວ ໃນປີ 2017 ແລະ ຄະນະຜູ້ແທນຂອງຄະນະກຳມາທິການທ່ອງທ່ຽວ ໄດ້ມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ ໃນປີ 2019. ສອງຝ່າຍໄດ້ແລກປ່ຽນຂໍ້ມູນ-ຂ່າວສານ, ສານຊົມເຊີຍ, ສານອວຍພອນ ໃນໂອກາດວັນສຳຄັນຕ່າງໆ ພ້ອມທັງສະໜັບສະໜູນ ເຊິ່ງກັນ ແລະກັນ ໃນເວທີພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນກອງປະຊຸມຄູ່ຮ່ວມເຈລະຈາລັດຖະສະພາອາຊີເອີຣົບ (ASEP), ສະຫະພັນລັດຖະສະພາສາກົນ (IPU) ແລະ ອື່ນໆ. ພ້ອມກັນນີ້, ສສ.ເຢຍລະມັນ ໃຫ້ການຊ່ວຍເຫລືອສະໜັບສະໜູນແກ່ສະພາແຫ່ງຊາດລາວ ໂດຍຜ່ານໂຄງການເຊກາ, ໂລຊາລຸກຊຳບວກ ແລະ ອົງການສາກົນຕ່າງໆ ໃນການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໃນໄລຍະຜ່ານມາ.

ສອງອົງການນິຕິບັນຍັດ ຂອງສອງປະເທດ ກໍໄດ້ປຶກສາຫາລືຮ່ວມກັນ ໃນການສືບຕໍ່ແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆນຳກັນຢ່າງເປັນປົກກະຕິ ຕິດພັນກັບການແລກປ່ຽນຂໍ້ມູນ-ຂ່າວສານກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດດ້ານນິຕິບັນຍັດ, ສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາສາກົນ ແລະ ບັນດາໂຄງການຮ່ວມມື ສອງຝ່າຍທີ່ກຳລັງຈັດຕັ້ງປະຕິບັດຢູ່ ກໍຄືແຜນການຮ່ວມມືທີ່ສອງລັດຖະບານໄດ້ຕົກລົງນຳກັນ, ສະເໜີຝ່າຍເຢຍລະມັນ ຊ່ວຍຂົນຂວາຍນັກທ່ອງທ່ຽວເຂົ້າມາທ່ອງທ່ຽວ ແລະ ຊຸກຍູ້ໃຫ້ພາກທຸລະກິດຂອງສອງປະເທດໃຫ້ມີການແລກປ່ຽນຂໍ້ມູນ, ທ່າແຮງ ແລະ ກາລະໂອກາດ ໃນການລົງທຶນ ແລະ ຮ່ວມມືທາງດ້ານການຄ້າສອງຝ່າຍນຳກັນ, ໃຫ້ຝ່າຍເຢຍລະມັນ ສືບຕໍ່ຊ່ວຍເຫລືອໃນການພັດທະນາຊັບພະຍາກອນມະນຸດ ໃຫ້ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຂອງລາວ ແລະ ສອງຝ່າຍ ຈະສືບຕໍ່ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນ ໃນການເຄື່ອນໄຫວຢູ່ເວທີລັດຖະສະພາພາກພື້ນ ແລະສາກົນ. ໃນນີ້, ລັດຖະສະພາເຢຍລະມັນ ຈະສະໜັບສະໜູນໃຫ້ແກ່ສະພາແຫ່ງຊາດລາວ ເຊິ່ງຈະເປັນເຈົ້າພາບຈັດກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ໃນປີ 2024.

ໃນໂອກາດຢ້ຽມຢາມ ແລະ ເຮັດວຽກຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ໄປທັດສະນະສຶກສາເບິ່ງຕຶກອາຄານລັດຖະສະພາ, ກົງຈັກການຈັດຕັ້ງ, ກົນໄກການເຮັດວຽກ ແລະ ລະບົບການບໍລິການຄົ້ນຄວ້າວິທະຍາສາດ, ການສະໜອງຂໍ້ມູນ-ຂ່າວສານ ຂອງລັດຖະສະພາ ບູນເດັດສະຕາກ ທີ່ນະຄອນຫລວງ ເບີລິນ ແລະ ໄປຢ້ຽມຢາມ ແລະ ເຮັດວຽກຢູ່ນະຄອນ ສະເວີຣິນ ແລະ ຮອດສະຕ໋ອກ ຂອງລັດເມກຄລັງເບີກ ວໍປອມເມີ. ນອກຈາກນັ້ນ, ຄະນະຜູ້ແທນ ກໍຍັງໄດ້ພົບປະ ແລະ ໂອ້ລົມນຳບັນດາຄົນເຊື້ອສາຍລາວ ທີ່ສະຖານທູດລາວ ປະຈຳນະຄອນຫລວງເບີລິນ ແລະ ຄະນະນຳຂອງສະຖານທູດລາວ ກໍໄດ້ອຳນວຍຄວາມສະດວກໃຫ້ແກ່ການຢ້ຽມຢາມ ແລະ ເຮັດວຽກ ໃນຄັ້ງນີ້ອີກດ້ວຍ.

### ສສຊ...

(ສພຊ) ລະຫວ່າງວັນທີ 22-23 ທັນວາ 2022 ວາລະສືບຕໍ່ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ທີ່ຫ້ອງປະຊຸມໃຫຍ່ຂອງສະພາແຫ່ງຊາດ ໂດຍການເປັນປະທານກອງປະຊຸມຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ; ເຂົ້າຮ່ວມເປັນຄະນະປະທານມີບັນດາທ່ານຮອງປະທານສະພາແຫ່ງຊາດ.

ໃນທີ່ປະຊຸມ, ທ່ານ ວຽງທະວີສອນ ເທບພະຈັນ ປະທານອົງການກວດສອບແຫ່ງລັດ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023; ລາຍງານຜົນການກວດສອບບົດສະຫລຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021 ແລະ ທ່ານ ຄຳພັນ ພົມມະທັດ ປະທານອົງການກວດກາແຫ່ງລັດ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023; ລາຍງານຜົນການກວດກາຕາມຜົນການກວດສອບ ປີ 2020.

ຈາກນັ້ນ, ທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫລຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021; ບົດລາຍງານຜົນການກວດກາຕາມຜົນການກວດສອບ ປີ 2020 ຕໍ່ກອງປະຊຸມ.ພ້ອມນັ້ນ,ປະທານກອງປະຊຸມໄດ້ມີຄຳເຈາະຈີ້ມ, ໃຫ້ທົດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໄດ້ປະກອບຄຳເຫັນຕໍ່ 2 ບົດລາຍງານຢ່າງກົງໄປກົງມາ ແລະ ຮັບຟັງການຊີ້ແຈງເພີ່ມເຕີມຈາກບັນດາກະຊວງ, ພາກສ່ວນກ່ຽວຂ້ອງ ຕື່ມອີກ.

ກອງປະຊຸມ, ຍັງໄດ້ຮັບຟັງທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ສະພາແຫ່ງຊາດ ຕາງໜ້າໃຫ້ກອງເລຂານຸການກອງປະຊຸມ ໄດ້ສະເໜີຮ່າງມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 2 ສະບັບ ຄື: ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021 ແລະ ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງອົງການກວດກາແຫ່ງລັດ; ບົດລາຍງານຜົນການກວດກາຕາມຜົນດານກວດສອບປີ 2020.

ກ່ອນໜ້ານີ້, ໃນວັນທີ 21 ທັນວາ 2022 ກອງປະຊຸມ ຍັງໄດ້ພິຈາລະນາກົດໝາຍວ່າດ້ວຍວິສາຫະກິດ (ປັບປຸງ) ພາຍໃຕ້ການເປັນປະທານກອງປະຊຸມຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ເຊິ່ງບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ສຸມໃສ່ຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງມີເຫດມີຜົນ ແລະ ກົງໄປກົງມາ ໃສ່ຮ່າງກົດໝາຍສະບັບດັ່ງກ່າວ ທີ່ໄດ້ສະເໜີໂດຍທ່ານ ມະໄລທອງ ກົມມະສິດ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ທັງໄດ້ຮັບຟັງການໃຫ້ຄວາມກະຈ່າງແຈ້ງຈາກຄະນະຮັບຜິດຊອບປັບປຸງຮ່າງກົດໝາຍສະບັບດັ່ງກ່າວ.

(ນາງ ປາກາລັກ ພົມມີໄຊ)